


# 2020

ບົດລາຍງານປະຈຳປີ ແລະ
ການພັດທະນາແບບຍືນຍົງ

ບໍລິສັດ ພູເບ້ຍ ມາຍນິງ
ສຸມໃສ່ແບບໂຄງສ້າງທຸລະກິດ
ທີ່ຍືນຍົງ ຕິດພັນກັບການ
ຜະລິດ ແລະ ການຂາຍທອງ ແລະ
ຄຳ, ການຊ່ວຍໃຫ້ບັນລຸເປົ້າໝາຍ
ການຜະລິດ ແລະ ເຕີບໂຕ
ຢ່າງມີຄວາມຮັບຜິດຊອບ

# ສາລະບານ



ສາຍພານ ແລະ ກອງແຮ່ຂອງໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ ໂດຍຈະເຫັນໂຮງງານຜະລິດ-ປຸງແຕ່ງ ແລະ ອ່າງເກັບຫາງແຮ່ ຢູ່ດ້ານຫຼັງ




ຂໍ້ມູນຫຍໍ້ກ່ຽວກັບບໍລິສັດ.......... 4

ຂໍ້ມູນສຳຄັນໃນປີ 2019.......... 6

ບົດປະກອບຄຳເຫັນຂອງປະທານບໍລິສັດ.......... 8

ການປະກອບສ່ວນທາງດ້ານການເງິນ ໃຫ້ແກ່ປະເທດລາວ.......... 10

ການທົບທວນດ້ານການດຳເນີນງານ.......... 12

ການປະຕິບັດວຽກງານດ້ານສັງຄົມ.......... 14

ການປະຕິບັດວຽກງານດ້ານສິ່ງແວດລ້ອມ.......... 17

ການປະຕິບັດວຽກງານດ້ານສຸຂະພາບ ແລະ ຄວາມປອດໄພ.......... 22

ພະນັກງານຂອງພວກເຮົາ.......... 24

# ຂໍ້ມູນຫຍໍ້ ກ່ຽວກັບບໍລິສັດ

ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ (ພູເບ້ຍ ມາຍນິງ, ບໍລິສັດ) ເປັນບໍລິສັດທີ່ນຳໜ້າ ດ້ານການຂຸດຄົ້ນ ແລະ ຜະລິດແຮ່ທອງ ແລະ ຄຳ ໃນ ສປປ ລາວ. ບໍລິສັດ ແພນ ແມ່ຂອງ ສຳຫຼວດ Pty ຈຳກັດຖືຮຸ້ນ 90 ສ່ວນຮ້ອຍໃນບໍລິສັດ ພູເບ້ຍ ມາຍນິງ, ຊຶ່ງເປັນບໍລິສັດລູກຂອງ ແພນອອສ໌ ຈຳກັດ (ແພນອອສ໌) ພາຍໃຕ້ການຖືກຳມະສິດທັງໝົດ. ລັດຖະບານລາວຖືຮຸ້ນ 10 ສ່ວນຮ້ອຍ.

ກວາງດົງ ຣາຍຊິງ ເອທເຄ (ໂຮນດິງ) ຈຳກັດ, ເຊິ່ງເປັນບໍລິສັດໃນເຄືອຂອງ ກວາງດົງ ຣາຍຊິງ ໂຮນດິງ ກຼຸບ (GRHG) ໄດ້ເປັນເຈົ້າຂອງ ບໍລິສັດອົດສະຕຣາລີ, ແພນອອສ໌ ຈຳກັດ. GRHG ແມ່ນບໍລິສັດລັດວິສາຫະກິດຂອງຈີນທີ່ດຳເນີນງານພາຍໃຕ້ຄະນະກຳມາທິການບໍລິຫານ ແລະ ຊີ້ນຳດ້ານຊັບສິນຂອງລັດວິສາຫະກິດ, ລັດຖະບານປະຊາຊົນຂອງແຂວງກວ່າງຕຸ້ງຢູ່ ຈີນ.

ສຳນັກງານໃຫຍ່ຂອງບໍລິສັດ ແພນອອສ໌ ຕັ້ງຢູ່ເມືອງບຣິສ໌ເບິນ, ປະເທດອົດສະຕຣາລີ ໄດ້ຊີ້ນຳ ແລະ ສະໜັບສະໜູນບໍລິສັດ ພູເບ້ຍ ມາຍນິງ ທາງດ້ານຍຸດທະສາດ, ການຄຸ້ມຄອງການເງິນ, ການບໍລິການດ້ານການຄ້າ ແລະ ວິຊາການ, ການຄຸ້ມຄອງຄວາມສ່ຽງ, ການພັດທະນາແບບຍືນຍົງ ແລະ ການສື່ສານພົວພັນຂອງບໍລິສັດ, ຊັບພະຍາກອນມະນຸດ, ກົດໝາຍ, ການຄຸ້ມຄອງ ແລະ ການລາຍງານ.

ໂຄງການຜະລິດທີ່ສຳຄັນ ໃນເຂດສຳປະທານຂອງບໍລິສັດ ແມ່ນໂຮງງານຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ, ແລະ ໂຮງງານຂຸດຄົ້ນ-ປຸງແຕ່ງ ຄຳ-ເງິນ ບ້ານຫ້ວຍຊາຍ, ເຊິ່ງທັງສອງໂຮງງານແມ່ນຕັ້ງຢູ່ພາຍໃຕ້ເນື້ອທີ່ສຳປະທານຂອງບໍລິສັດທັງໝົດ 2,600 ກິໂລຕາແມັດ (ເຂດສັນຍາ).

ບໍລິສັດ ພູເບ້ຍ ມາຍນິງ ໄດ້ເຊັນສັນຍາສຳຫຼວດ ແລະ ຜະລິດແຮ່ທາດ (MEPA) ຮ່ວມກັບ ລັດຖະບານລາວ ເຊິ່ງໄດ້ກຳນົດເງື່ອນໄຂຕ່າງໆໃນການສຳຫຼວດ, ການພັດທະນາ ແລະ ກິດຈະກຳການຂຸດຄົ້ນແຮ່ທາດພາຍໃຕ້ເຂດສັນຍາ, ແລະ ໄດ້ກຳນົດພັນທະທາງດ້ານອາກອນ ແລະ ຄ່າຊັບພະຍາກອນແຮ່ທາດຂອງບໍລິສັດ.

ສຳນັກງານຂອງບໍລິສັດ ຢູ່ນະຄອນຫຼວງວຽງຈັນ ຮັບຜິດຊອບການດຳເນີນງານຕ່າງໆໃນລາວ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດທຸລະກິດຂອງແພນອອສ໌ ຢູ່ພາຍໃນລາວ

## ກ່ຽວກັບບົດລາຍງານສະບັບນີ້

ບົດລາຍງານສະບັບນີ້ ໄດ້ຈັດກຽມໂດຍບໍລິສັດ ພູເບ້ຍ ມາຍນິງ ຈຸດປະສົງເພື່ອສະໜອງຂໍ້ມູນທີ່ເປັນພາບລວມກ່ຽວກັບການຜະລິດ, ທຸລະກິດ ແລະ ການພັດທະນາແບບຍືນຍົງສຳລັບປີປະຕິທິນ 2019 ໃຫ້ລັດຖະບານລາວ. ບໍລິສັດ ພູເບ້ຍ ມາຍນິງ ນຳໃຊ້ວິທີການແບບດຽວກັນໃນການກຳນົດ,ປະເມີນ ແລະ ກວດສອບບັນຫາດ້ານການພັດທະນາແບບຍືນຍົງຊຶ່ງສຳຄັນທີ່ສຸດຕໍ່ບໍລິສັດ ພູເບ້ຍ ມາຍນິງ ແລະ ຜູ້ມີສ່ວນໄດ້ສ່ວນເສຍຂອງບໍລິສັດ. ບັນຫາເຫຼົ່ານັ້ນ ໄດ້ສ້າງພື້ນຖານສຳລັບເນື້ອໃນທີ່ລວມໄວ້ຢູ່ໃນບົດລາຍງານສະບັບນີ້.

ບົດລາຍງານສະບັບນີ້ ບໍ່ໄດ້ລວມເອົາຂໍ້ມູນທັງໝົດທີ່ຈຳເປັນເພື່ອປະເມີນທຸລະກຳ ຫຼື ການລົງທຶນໄດ້ຢ່າງຄົບຖ້ວນ, ແລະ ທ່ານບໍ່ຄວນອີງໃສ່ເນື້ອໃນຂອງບົດລາຍງານສະບັບນີ້. ບໍລິສັດ ພູເບ້ຍ ມາຍນິງ ປະຕິເສດ ແລະ ລະເວັ້ນຄວາມຮັບຜິດຊອບທັງໝົດ (ຕາມການອະນຸຍາດໂດຍກົດໝາຍ), ສຳລັບການສູນເສຍ, ການຮຽກຮ້ອງ, ຄວາມເສຍຫາຍ, ຄວາມຕ້ອງການ, ຕົ້ນທຶນ ແລະ ຄ່າໃຊ້ຈ່າຍຕ່າງໆໃນລັກສະນະໃດກໍ່ຕາມທີ່ເກີດຂຶ້ນໃນທາງໃດໜຶ່ງທີ່ບໍ່ມີ ຫຼື ມີສ່ວນກ່ຽວຂ້ອງກັບຂໍ້ມູນທີ່ມີຢູ່ໃນບົດລາຍງານສະບັບນີ້, ຄວາມຖືກຕ້ອງ, ຄວາມສົມບູນຂອງບົດລາຍງານ ຫຼື ດ້ວຍເຫດຜົນຂອງການເອື່ອຍອີງໃສ່ເນື້ອໃນໃດໜຶ່ງຂອງບົດລາຍງານດັ່ງກ່າວໂດຍບຸກຄົນໃດກໍ່ຕາມ. ຜູ້ຮັບ ຮັບຮູ້ວ່າສະຖານະການຕ່າງໆອາດມີການປ່ຽນແປງ ແລະ ຜົນກໍ່ຄືວ່າເອກະສານສະບັບນີ້ອາດລ້າສະໄໝ. ບໍລິສັດ ພູເບ້ຍ ມາຍນິງ ບໍ່ມີຂໍ້ຜູກມັດທີ່ຈະອັບເດດ ຫຼື ແກ້ໄຂຄວາມບໍ່ຖືກຕ້ອງໃດໆ ຫຼື ການລະເວັ້ນຕ່າງໆຢູ່ໃນບົດລາຍງານສະບັບນີ້.

ບົດລາຍງານສະບັບນີ້ ລວມມີຂໍ້ຄວາມທີ່ເບິ່ງອະນາຄົດ ຊຶ່ງສະທ້ອນເຖິງແນວຄວາມຄິດ, ຄວາມຄາດຫວັງ, ຄວາມເຊື່ອ, ເຈດຈຳນົງ, ການຄາດຄະເນ ຫຼື ຍຸດທະສາດຕ່າງໆຂອງພວກເຮົາ ກ່ຽວກັບອະນາຄົດ, ຊຶ່ງອາດຈະບໍ່ບັນລຸຜົນ. ຂໍ້ຄວາມເຫຼົ່ານີ້ອາດໄດ້ຮັບການລະບຸໂດຍນຳໃຊ້ຄຳເວົ້າເຊັ່ນ ຄາດການ, ເຊື່ອວ່າ, ຄາດຄະເນ, ຄາດຫວັງ, ຕັ້ງໃຈ, ອາດຈະ, ວາງແຜນ, ຈະ, ຄວນ, ຂໍ, ແລະ ຄຳເວົ້າທີ່ຄ້າຍຄືກັນ. ຂໍ້ຄວາມທີ່ເບິ່ງອະນາຄົດດັ່ງກ່າວນີ້ ສະທ້ອນເຖິງມຸມມອງຂອງບໍລິສັດ ແລະ ການສັນນິຖານ ກ່ຽວກັບເຫດການໃນອະນາຄົດ ແລະ ຂຶ້ນຢູ່ກັບຄວາມສ່ຽງ ແລະ ຄວາມບໍ່ແນ່ນອນ. ຄວາມສ່ຽງ ແລະ ຄວາມບໍ່ແນ່ນອນເຫຼົ່ານັ້ນ ລວມມີປັດໃຈ ແລະ ຄວາມສ່ຽງຕ່າງໆສະເພາະອຸດສາຫະກຳທີ່ບໍລິສັດ ພູເບ້ຍ ມາຍນິງ ເຂົ້າໄປດຳເນີນງານ ເຊັ່ນດຽວກັບສະພາບເສດຖະກິດທົ່ວໄປ, ອັດຕາແລກປ່ຽນ ແລະ ອັດຕາດອກເບ້ຍໃນສະເພາະເວລາໃດໜຶ່ງ ແລະ ສະພາບການຕ່າງໆຢູ່ໃນຕະຫຼາດທາງດ້ານການເງິນ. ຂໍ້ຄວາມແບບນັ້ນ ກໍ່ໄດ້ຮັບຜົນກະທົບໂດຍການປ່ຽນແປງຕ່າງໆຊຶ່ງປະກອບມີ, ແຕ່ບໍ່ຈຳກັດຕໍ່ຄວາມຜັນຜວນຂອງລາຄາສິນຄ້າ, ຄວາມຜັນຜວນຂອງລາຄາປັດໃຈການຜະລິດ, ຄວາມຜັນຜວນຂອງເງິນຕາ, ຄວາມຕ້ອງການຕົວຈິງ, ປັດໃຈດ້ານທໍລະນີເຕັກນິກ, ຄາດຄະເນຊັບພະຍາກອນແຮ່ທາດ ແລະ ປະລິມານສະສົມຂອງແຮ່ທາດ, ຜົນການດຳເນີນງານ, ປັດໃຈການກຳກັບດູແລ ແລະ ຄຸ້ມຄອງ, ສະພາບການທາງດ້ານເສດຖະກິດ, ການເງິນ ແລະ ການເມືອງ ໃນປະເທດຕ່າງໆ, ການອະນຸມັດ ແລະ ການຄາດຄະເນຕົ້ນທຶນ. ຜົນໄດ້ຮັບ ແລະ ແນວໂນ້ມໃນຕົວຈິງ ແລະ ໃນອະນາຄົດ ສ່ວນໃຫຍ່ອາດແຕກຕ່າງຈາກສິ່ງທີ່ໄດ້ລະບຸໂດຍຂໍ້ຄວາມດັ່ງກ່າວ ເນື່ອງຈາກປັດໃຈຕ່າງໆ, ລວມທັງສິ່ງທີ່ເໜືອຄວາມສາມາດຂອງບໍລິສັດ ທີ່ຈະຄວບຄຸມ ຫຼື ຄາດເດົາໄດ້. ເນື່ອງຈາກຄວາມບໍ່ແນ່ນອນເຫຼົ່ານີ້, ທ່ານບໍ່ຄວນເອື່ອຍອີງໃສ່ຂໍ້ຄວາມທີ່ເບິ່ງອະນາຄົດດັ່ງກ່າວນີ້.

ຂໍ້ມູນບາງຢ່າງທີ່ລວມໄວ້ຢູ່ໃນເອກະສານສະບັບນີ້ ໄດ້ຈາກແຫຼ່ງສິ່ງພິມ ແລະ/ຫຼື ຈັດກຽມໂດຍພາກສ່ວນອື່ນໆ (ລວມມີຜູ້ໃຫ້ບໍລິການ, ແລະ ໜ່ວຍງານລັດຖະບານ), ຊຶ່ງໄດ້ຮັບການອັດເດດຜ່ານວັນທີທີ່ໄດ້ກ່າວມານັ້ນ. ໃນຂະນະທີ່ແຫຼ່ງຂໍ້ມູນດັ່ງກ່າວ ເຊື່ອວ່າສາມາດເຊື່ອຖືໄດ້ ອີງຕາມສະພາບການໃນປັດຈຸບັນ, ສະຖານະການໃນຕະຫຼາດ ແລະ ຄວາມເຊື່ອ, ທັງບໍລິສັດ ພູເບ້ຍ ມາຍນິງ ຫຼື ຜູ້ອຳນວຍການຂອງພວກເຮົາທີ່ກ່ຽວຂ້ອງ, ພະນັກງານ, ແຮງງານ, ທີ່ປຶກສາ, ສະມາຊິກ, ຮຸ້ນສ່ວນ, ຜູ້ມີສ່ວນໄດ້ສ່ວນເສຍ ຫຼື ບໍລິສັດລູກ ບໍ່ຮັບຜິດຊອບຕໍ່ຄວາມຖືກຕ້ອງ ຫຼື ຄວາມສົມບູນຂອງຂໍ້ມູນດັ່ງກ່າວ.

# ບໍລິສັດ ແພນອອສ໌ ຕັ້ງໜ້າຊອກຫາ ໂອກາດຕ່າງໆ ເພື່ອເພີ່ມປະສິດທິພາບ, ເຮັດໃຫ້ການປະຕິບັດ ວຽກງານດ້ານຄວາມ ປອດໄພມີຜົນດີທີ່ສຸດ ຫຼຸດຄ່າໃຊ້ຈ່າຍຕ່າງໆລົງ ແລະ ເຮັດໃຫ້ ລາຍຈ່າຍເງິນທຶນເພີ່ມ ເຕີມໜ້ອຍລົງ



ປີລໍ ສຸວັນ, ຫົວໜ້າຄຸມງານ ພະແນກຝຶກອົບຮົມ ແລະ ຄວາມ ປອດໄພຢູ່ໂຄງການຂຸດຄົ້ນ-ປຸງ ແຕ່ງທອງ-ຄຳ ພູຄຳ ກຳລັງເຮັດ ວຽກຢູ່ໂຮງງານຜະລິດ-ປຸງແຕ່ງ ຂອງໂຄງການ, ພະຈິກ 2018

# ຂໍ້ມູນສຳຄັນໃນປີ 2019

**US$91.70 ລ້ານ**

ການປະກອບສ່ວນໂດຍກົງໃຫ້
ລັດຖະບານລາວ

**2.1 ສ່ວນຮ້ອຍ**

ສັດສ່ວນຂອງລວມຍອດຜະລິດຕະພັນພາຍໃນ (GDP)
ລາວມາຈາກການດຳເນີນງານຂອງບໍລິສັດ ພູເບັຍ ມາຍນິງ ຈຳກັດ

**Cu**

**69,284 ໂຕນ (t)**

ການຜະລິດທອງໃນແຮ່ເຂັ້ມຂຸ້ນ

**Au**

**167,418 ອອນ (oz)**

ການຜະລິດຄຳແທ່ງປະສົມ

**Ag**

**1,107,361oz**

ການຜະລິດເງິນແທ່ງປະສົມ

## ການສ້າງລາຍຮັບໃຫ້ຊຸມຊົນທ້ອງຖິ່ນ




## ອັດຕາສ່ວນຮ້ອຍຂອງ GDP ລາວທີ່ມີການປະກອບ ສ່ວນຈາກການດຳເນີນງານ ຂອງບໍລິສັດ ພູເບັ້ຍ ມາຍນິງ ຈຳກັດ (2017-2019)



**US$3.19 ລ້ານ**

ໄດ້ລົງທຶນເຂົ້າໃນໂຄງລ່າງພື້ນຖານ
ແລະ ການບໍາລຸງຮັກສາເສັ້ນທາງຫຼວງ

**92 ສ່ວນຮ້ອຍ**

ພະນັກງານລາວ

**US$971,839**

ລາຍໄດ້ທີ່ສ້າງແກ່ຊຸມຊົນທ້ອງຖິ່ນ ໂດຍ
ຜ່ານການຊື້ຜັກ,
ນໍ້າດື່ມ, ໄຂ່, ຖົ່ງ, ໝາກໄມ້ ແລະ ປາ

**US$57,156**

ການບໍລິຈາກ ແລະ ການ
ສະໜັບສະໜູນທັງໝົດເປັນເງິນສົດ
ແລະ ວັດຖຸປັດໃຈ

**30**

ໂຄງການພັດທະນາຊຸມຊົນຂະໜາດນ້ອຍ
ໄດ້ຮັບການຈັດຕັ້ງປະຕິບັດໂດຍຜ່ານທຶນ
ພັດທະນາຊຸມຊົນ (CDFs)

**US$113,941**

ການລົງທຶນທັງໝົດເຂົ້າໃນຊຸມຊົນ
ໂດຍຜ່ານ CDFs

ການຜະລິດທອງ



# ບົດປະກອບຄຳເຫັນ ຂອງປະທານບໍລິສັດ



ຮູບດ້ານເທິງ: ປະທານບໍລິສັດ ພູເບ້ຍ ມາຍນິງ, ຈັນເພັງ ບຸນນະຜົນ ຢູ່ໃນຫ້ອງເຮັດວຽກຂອງທ່ານຢູ່ຫ້ອງການຂອງ ບໍລິສັດ ພູເບ້ຍ ມາຍນິງ ໃນນະຄອນຫຼວງວຽງຈັນ, ລາວ

**ຢູ່ບໍລິສັດ ພູເບ້ຍ ມາຍນິງ (PBM), ຄວາມເຄົາລົບ ແລະ ຄວາມມຸ້ງໝັ້ນຕໍ່ລັດຖະບານ ແລະ ປະຊາຊົນລາວ ແລະ ບັນດາຊຸມຊົນ ແມ່ນເປັນສ່ວນສຳຄັນຢູ່ໃນຄຸນນະທຳຂອງພວກເຮົາ. ພວກເຮົາມຸ້ງໝັ້ນໃນການຮັບປະກັນວ່າໂຄງການຂອງພວກເຮົາ ແມ່ນມີຜົນດີຕໍ່ບັນດາຊຸມຊົນເຈົ້າພາບບ່ອນທີ່ພວກເຮົາເຂົ້າໄປດຳເນີນງານ.**

ບໍລິສັດ ສິ້ນສຸດປີ 2019 ດ້ວຍຜົນການຜະລິດ, ຄວາມປອດໄພທີ່ເຂັ້ມແຂງ ແລະ ປະຫຍັດຕົ້ນທຶນ. ໂຄງການພູຄຳ ສາມາດຜະລິດທອງໄດ້ 69,284 ໂຕນ (t), ຄຳ 64,128 ອອນ (oz) ແລະ ເງິນ 377,017 ອອນ ໃນຄ່າໃຊ້ຈ່າຍໝົດບໍລິສັດ (AISC**) ເທົ່າກັບ $1.73/ປອນສຳລັບທອງ. ບັນລຸຕົ້ນທຶນ 1* ໄດ້ $1.19. ການຜະລິດຄຳ ແລະ ເງິນ ຢູ່ໂຄງການ ບ້ານຫ້ວຍຊາຍ ໄດ້ທັງໝົດ 103,289 ອອນ ແລະ 730,344 ອອນ ຕາມລຳດັບ, ໃນ 1 ແລະ ຄ່າໃຊ້ຈ່າຍໝົດຂອງບໍລິສັດເທົ່າກັບ $720 ແລະ $919/ອອນສຳລັບຄຳ ຕາມລຳດັບ.

ບໍລິສັດ ໄດ້ປະກອບສ່ວນທາງອ້ອມ ແລະ ໂດຍກົງ ທາງດ້ານການເງິນ ໃຫ້ແກ່ລັດຖະບານລາວ ແລະ ເສດຖະກິດຂອງລາວ ໃນລະດັບຊຸມຊົນ ແລະ ລະດັບຊາດໃນໄລຍະປີ 2019. ໃນໄລຍະປີດັ່ງກ່າວ, ການມອບພັນທະໂດຍກົງຂອງພວກເຮົາໃຫ້ລັດຖະບານລາວ ຜ່ານອາກອນຕ່າງໆ ແລະ ຄ່າຊົບພະຍາກອນແຮ່ທາດ ແລະ ເງິນປັນຜົນ ລວມທັງໝົດຫຼາຍກວ່າ $91 ລ້ານ. ມາຮອດປັດຈຸບັນ, ການປະກອບສ່ວນຂອງບໍລິສັດໃຫ້ລັດຖະບານລາວ ບັນລຸຫຼາຍກວ່າ $808 ລ້ານ. ພວກເຮົາໄດ້ຊຳລະຄ່າຈັດຫາສິນຄ້າ ແລະ ບໍລິການຈາກຜູ້ສະໜອງລາວ ແລະ ຜູ້ສະໜອງຕ່າງປະເທດປະຈຳລາວ ຈຳນວນ $2,04 ລ້ານ.

ໃນຂັ້ນທ້ອງຖິ່ນ, ພວກເຮົາມອບເງິນຈຳນວນ $57,156 ເຂົ້າໃນການບໍລິຈາກ ແລະ ອຸປະຖຳຕ່າງໆ ແລະ ຈັດຊື້ເຄື່ອງອຸປະໂພກ-ບໍລິໂພກໂດຍກົງ ຈາກທຸລະກິດຊຸມຊົນທ້ອງຖິ່ນທີ່ຢູ່ໃກ້ໂຄງການ ຈຳນວນ US$971,839 ໃນໄລຍະຕະຫຼອດປີ 2019.

ສະພາບຝົນຕົກໜັກຊຶ່ງຕົກຢູ່ໃນພາກກາງ ແລະ ພາກໃຕ້ຂອງລາວໃນໄລຍະປີດັ່ງກ່າວ ໄດ້ກໍ່ໃຫ້ເກີດໄພນ້ຳຖ້ວມຕາມມາ, ເຊິ່ງສົ່ງຜົນກະທົບຕໍ່ຜູ້ຢູ່ອາໄສຫຼາຍກວ່າ 700,000 ຄົນ ໃນແຂວງຈຳປາສັກ, ສາລະວັນ, ເຊກອງ, ສະຫວັນນະເຂດ, ອັດຕະປື ແລະ ຄຳມ່ວນ. ບໍລິສັດ ພູເບ້ຍ ມາຍນິງ ໄດ້ບໍລິຈາກເງິນສົດຈຳນວນ $20,000 ໃຫ້ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ໂດຍປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມຂອງລັດຖະບານລາວ.

ຢູ່ບໍລິສັດ ພູເບ້ຍ ມາຍນິງ, ຄວາມປອດໄພ ແມ່ນສຳຄັນທີ່ສຸດ. ຄວາມມຸ້ງໝັ້ນຂອງພວກເຮົາຕໍ່ເປົ້າໝາຍດ້ານຄວາມປອດໄພທີ່ຈະເຮັດໃຫ້ການບາດເຈັບເປັນສູນ ບໍ່ພຽງແຕ່ຊ່ວຍໃຫ້ພະນັກງານມີຄວາມປອດໄພຢູ່ສະເໝີເທົ່ານັ້ນ, ມັນຍັງຊ່ວຍໃຫ້ເຂົ້າໃຈບໍລິສັດໄດ້ດີ. ບໍລິສັດແມ່ຂອງບໍລິສັດ ພູເບ້ຍ ມາຍນິງ, ແພນອອສ໌ ໄດ້ປະຕິບັດໄດ້ຜົນດີຢ່າງສະໝ່ຳສະເໝີກວ່າບໍລິສັດໃນອຸດສາຫະກຳຂະແໜງດຽວກັນ ຊຶ່ງສະແດງໃຫ້ເຫັນເຖິງຄວາມມຸ້ງໝັ້ນທີ່ປະຈັກຕາຕໍ່ການເຮັດໃຫ້ການບາດເຈັບເປັນສູນ. ໃນປີ 2019, ອັດຕາຄວາມຖີ່ໃນການບາດເຈັບທີ່ສາມາດບັນທຶກໄດ້ທັງໝົດ (TRIFR) ຂອງບໍລິສັດແມ່ນ 0.43 ຕໍ່ລ້ານຊົ່ວໂມງການເຮັດວຽກ, ປັບປຸງດີຂຶ້ນ 30 ສ່ວນຮ້ອຍໃນຕົວວັດຜົນດ້ານຄວາມປອດໄພປີ 2018. ອັດຕາຄວາມຖີ່ການບາດເຈັບທີ່ຕ້ອງ

* ບໍລິສັດທີ່ປຶກສາດ້ານພະລັງງານ ແລະ ໂລຫະທາດ (Brook Hunt Convention) ກ່ຽວກັບການລາຍງານຕົ້ນທຶນການຜະລິດໂດຍກົງ ເຊິ່ງປະກອບມີ: ສະຖານທີ່ຕັ້ງໂຮງງານ, ການຂົນສົ່ງຜະລິດຕະພັນ ແລະ ຈັດສົ່ງ, ຄ່າບຳບັດ ແລະ ກັ່ນແຮ່ ແລະ ຄ່າໃຊ້ຈ່າຍດ້ານການຕະຫຼາດ; ໂດຍອີງຕາມລາຍຈ່າຍທີ່ຈະເກີດຂຶ້ນຂອງໂລຫະທາດ ຫຼັງຈາກການຂາຍແຮ່ຕິດພັນ.

** ຕົ້ນທຶນການຜະລິດທັງໝົດ (AISC) ແມ່ນຕົ້ນທຶນ C1 ບວກກັບຄ່າຊົບພະຍາກອນແຮ່ທາດ, ການແບ່ງສ່ວນຄ່າທຳນຽມຕ່າງໆ, ຕົ້ນທຶນການບໍລິການແບບລວມສູນ, ຕົ້ນທຶນລວມ; ຕົ້ນທຶນລວມ; ຄ່າເຊົ່າສຳປະທານ ແລະ ຄ່າທຳນຽມດອກເບ້ຍ; ແລະ ທຶນດ້ານການດັດປັບສິນຄ້າຄົງເຫຼືອ ແລະ ການຂຸດຄົ້ນທີ່ເລື່ອນອອກໄປ.

ພັກວຽກ (LTIFR) ແມ່ນບັນລຸ 0.21 ຕໍ່ລ້ານຊົ່ວໂມງການເຮັດວຽກໃນປີ 2019. ການປັບປຸງຕົວວັດຜົນທາງດ້ານຄວາມປອດໄພຂອງພວກເຮົາໃນແຕ່ລະປີ ຊີ້ບອກເຖິງການເຕີບໂຕຂອງຂັ້ນຕອນ ແລະ ລະບົບທາງດ້ານຄວາມປອດໄພທີ່ກໍານົດໄວ້ຢູ່ໂຄງການຂອງພວກເຮົາ.

ໃນເດືອນພຶດສະພາ, ບໍລິສັດ ເປັນກຽດໄດ້ຕ້ອນຮັບຄະນະຕົວແທນຂອງການນໍາຂັ້ນສູງຈາກຄະນະກໍາມະການບໍລິຫານ ແລະ ຫົວໜ້າພະແນກຊັບສິນຂອງລັດ (SASAC) ຂອງລັດຖະບານແຂວງກວາງຕຸ້ງ, ຜູ້ຖືຮຸ້ນຂອງບໍລິສັດ, ກວາງຕຸ້ງ ໄລຊິ້ງ ໂຮລດິ້ງ ກຣຸບ (GRHG).

ຄະນະດັ່ງກ່າວ - ນໍາໂດຍຜູ້ອໍານວຍການຂອງ SASAC, ທ່ານ ລີ ແລະ ປະທານບໍລິສັດ ກວາງຕຸ້ງ ໄລຊິ້ງ ແອດເຊັດສ໌ ເມເນດຈ໌ເມັ້ນ (GRAM), ປະທານ ຊູ - ໄດ້ໄປຢ້ຽມຢາມຫ້ອງການວຽງຈັນ ແລະ ໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄໍາ ພູຄໍາ ແລະ ໂຄງການຂຸດຄົ້ນ-ປຸງແຕ່ງ ຄໍາ-ເງິນ ບ້ານຫ້ວຍຊາຍ. ຄະນະມີຄວາມປະທັບໃຈກັບການດໍາເນີນການຂຸດຄົ້ນຂອງບໍລິສັດ ແລະ ການເລີ່ມຕົ້ນປີ 2019 ທີ່ພົ້ນເດັ່ນ ຊຶ່ງລວມມີການບາດເຈັບທາງດ້ານຄວາມປອດໄພທີ່ສາມາດລາຍງານໄດ້ເປັນສູນ, ແຜນລິເລີ້ມປະຫຍັດຄ່າໃຊ້ຈ່າຍທີ່ຮອບຄອບ, ການຜະລິດທອງ ແລະ ຄໍາ ລື່ນຄາດໝາຍ ແລະ ຜົນທາງດ້ານການເງິນທີ່ເຂັ້ມແຂງໃນໄຕມາດທໍາອິດ.

ນີ້ເປັນຄັ້ງທໍາອິດທີ່ຄະນະຕົວແທນ ແລະ ພະນັກງານຂັ້ນສູງຈາກຂາຮຸ້ນ ໄດ້ລົງຢ້ຽມຢາມບັນດາໂຄງການດັ່ງກ່າວໃນລາວ. ພວກເຂົາສະແດງໃຫ້ເຫັນວ່າພວກເຂົາຮູ້ສຶກດີໃຈທີ່ໄດ້ມີໂອກາດເຫັນ ແລະ ເຂົ້າໃຈແນວທາງທີ່ບໍລິສັດໄດ້ສືບຕໍ່ເສີມຂະຫຍາຍຊື່ສຽງທາງດ້ານສຸຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມຢ່າງເຂັ້ມແຂງທັງໃນລາວ ແລະ ຕ່າງປະເທດ. ສິ່ງສໍາຄັນ, ການຢ້ຽມຢາມໃນຄັ້ງນີ້ ໄດ້ໃຫ້ຕົວແທນຂອງບໍລິສັດມີໂອກາດໂອ້ລົມກັບຜູ້ຖືກຮຸ້ນ ກ່ຽວກັບແຜນຍຸດທະສາດຂອງບໍລິສັດ ເພື່ອຕໍ່ອາຍຸຂອງບໍ່ແຮ່ຂອງໂຄງການໃນລາວ ຄະນະຕົວແທນໄດ້ໃຫ້ການສະໜັບສະໜູນແຜນທີ່ຈະຕໍ່ອາຍຸຂອງບໍ່ຂຸດຄົ້ນດັ່ງກ່າວ.

ໃນປີ 2019, ບໍລິສັດ ແພນອອສ໌ ແລະ ພູເບ້ຍ ມາຍນິງ ໄດ້ຮັບການຍ້ອງຍໍໃນເອທີສາກົນ. ໃນເດືອນພຶດສະພາ, ບໍລິສັດ ແພນອອສ໌ ໄດ້ຮັບ ລາງວັນນະວັດຕະກໍາໃໝ່ຂອງນັກຂຸດຄົ້ນ ຢູ່ທີ່ ງານວາງສະແດງ & ກອງປະຊຸມວ່າດ້ວຍນະວັດຕະກໍາດ້ານບໍ່ແຮ່ ປະຈໍາປີ 2019 ຂອງ  ໃນເມືອງບຣິສ໌ເບິນ, ອົດສະຕຣາລີ. ລາງວັນນີ້ແມ່ນຍ້ອງຍໍການແກ້ໄຂບັນຫາຢ່າງມີຫົວຄິດປະດິດສ້າງ ຊຶ່ງວ່າການຂົນສົ່ງນໍ້າມັນ ແລະ ຂົນນໍ້າມັນຂຶ້ນຫຼັງລົດແກ່ແຮ່ເຂັ້ມຂຸ້ນທີ່ຕີເປົ່າໄປ ແລະ ກັບຈາກຈຸດຄ່ຽນຖ່າຍຂອງບໍລິສັດ ຢູ່ບ້ານທວາຍ ແລະ ໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄໍາ ພູຄໍາ. ຕໍ່ມາໃນເດືອນພະຈິກ ຢູ່ທີ່ພິທີມອບ-ຮັບລາງວັນແຮ່ທາດອາຊຽນ ຊຶ່ງຈັດຂຶ້ນຢູ່ບາງກອກ, ບໍລິສັດ ພູເບ້ຍ ມາຍນິງ ຖືກປະກາດໃຫ້ເປັນຮອງຊະນະເລີດສໍາລັບ ການປະຕິບັດທີ່ດີທີ່ສຸດໃນການພັດທະນາແຮ່ທາດແບບຍືນຍົງ (ການປຸງແຕ່ງແຮ່ທາດໂລຫະ). ລາງວັນແຮ່ທາດອາຊຽນ ຍ້ອງຍໍບໍລິສັດສໍາລັບຄວາມມຸ້ງໝັ້ນເພີ້ມຂຶ້ນ ແລະ ຕໍ່ເນື່ອງໃນການປະຕິບັດທີ່ດີທີ່ສຸດ ແລະ ມາດຕະຖານສູງໃນການປຸງແຕ່ງແຮ່ທາດຢູ່ໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄໍາ ພູຄໍາ.

ຄວາມມຸ້ງໝັ້ນໄລຍະຍາວຂອງພວກເຮົາຕໍ່ການພັດທະນາແຮງງານທ້ອງຖິ່ນຂອງພວກເຮົາໂດຍຜ່ານການແຜນງານຝຶກອົບຮົມ ແລະ ພັດທະນາຍັງຄົງຍຶດໝັ້ນ. ພວກເຮົາໄດ້ຮັກສາຈໍານວນແຮງງານທີ່ລວມມີພະນັກງານຄົນລາວ 92 ສ່ວນຮ້ອຍ ເປັນເວລາສອງປີຕິດຕໍ່ກັນ. ແຜນງານພັດທະນາຢູ່ພາຍໃນບໍລິສັດ ທີ່ສົ່ງເສີມພະນັກງານໃຫ້ມີທັກສະໃໝ່ ແລະ ຊ່ວຍໃຫ້ວຸດທິການສຶກສາຂອງພວກເຂົາມີຄວາມກ້າວໜ້າແມ່ນກຸນແຈສໍາຄັນຕໍ່ຄວາມຕໍ່ເນື່ອງຂອງແນວທາງໃນລະດັບສູງຂຶ້ນດັ່ງກ່າວນີ້ໃນການພັດທະນາແຮງງານທ້ອງຖິ່ນ.

ໃນເດືອນກຸມພາ, ພະນັກງານຈໍານວນ 141 ຄົນ ຈົບຈາກແຜນງານພັດທະນາດ້ານການຄຸມງານຂອງບໍລິສັດ ຊຶ່ງແນ່ໃສ່ພະນັກງານທີ່ມີສັກກະຍາພາບສູງ ແລະ ຊ່ວຍພວກເຂົາໃນການພັດທະນາທັກສະຄວາມເປັນຜູ້ນໍາຂອງພວກເຂົາໃນຂະແໜງການວາງແຜນ ແລະ ຍຸດທະສາດ, ຄຸ້ມຄອງການປະຕິບັດວຽກງານ, ການແກ້ໄຂບັນຫາ, ການສື່ສານ ແລະ ການເຈລະຈາ. ພິທີມອບ-ຮັບໃບປະກາດ ເພື່ອສະຫຼອງຄວາມສໍາເລັດຊຶ່ງຈັດຂຶ້ນຢູ່ໂຮງແຮມ ຄຣາວ ພລາຊາ ໃນນະຄອນຫຼວງວຽງຈັນ.

ຕໍ່ມາໃນເດືອນມີນາ, ບໍລິສັດໄດ້ເລີ້ມແຜນງານປະເມີນເພື່ອຮັບຮອງ (CAP) ສໍາລັບພະນັກງານລາວທີ່ມີເງື່ອນໄຂ. ແຜນລິເລີ້ມການພັດທະນາພະນັກງານໃໝ່, CAP ຮັບເອົາພະນັກງານຊ່າງສີມືແຮງງານລາວທີ່ມີເງື່ອນໄຂຢູ່ໃນແຜນການຝຶກອົບຮົມອາຊີວະສຶກສາ ຂອງກະຊວງສຶກສາ ແລະ ກິລາ ຂອງລາວ ຊຶ່ງຊ່ວຍໃຫ້ພວກເຂົາສາມາດໄດ້ຮັບວຸດທິການສຶກສາດ້ານຊ່າງສີມືແຮງງານລາວຢ່າງເປັນທາງການ. ຢູ່ທີ່ພິທີມອບ-ຮັບໃບປະກາດ ສໍາລັບຜູ້ເຂົ້າຮ່ວມແຜນງານດັ່ງກ່າວຈໍານວນ 174 ຄົນໃນເດືອນທັນວາ, ໃບຢັ້ງຢືນຊ່າງສີມືແຮງງານລາວ ໄດ້ມອບໃຫ້ຜູ້ເຂົ້າຮ່ວມທີ່ຈົບການສຶກສາຊັ້ນປະຖົມ, ແລະ ໃບປະກາດ ໄດ້ມອບໃຫ້ຜູ້ທີ່ຈົບການສຶກສາລະດັບມັດທະຍົມ ຫຼື ໃບປະກາດ/ໃບປະລິນຍາ ໃນສາຂາວິຊາອື່ນ.

ສຸດທ້າຍນີ້, ໃນລະຫວ່າງປີດັ່ງກ່າວ, ໄດ້ບັນຈຸນັກຮຽນຝຶກງານໃໝ່ເພີ້ມອີກ 44 ຄົນຈາກແຜນງານຝຶກຫັດຊ່າງສີມືແຮງງານຂອງບໍລິສັດ ເປັນພະນັກງານຖາວອນ.

ຄວາມມຸ້ງໝັ້ນຂອງພວກເຮົາຕໍ່ແຜນປິດບໍ່ຂຸດຄົ້ນທີ່ເອົາຈິງເອົາຈັງ ແລະ ມີຄວາມໝາຍສໍາຄັນ ໄດ້ຮັບການສືບຕໍ່ຜ່ານການສົນທະນາແລກປ່ຽນຢ່າງເປີດອົກ, ໂປ່ງໃສ ແລະ ຕໍ່ເນື່ອງ ກັບລັດຖະບານທຸກຂັ້ນ ແລະ ບັນດາຊຸມຊົນອ້ອມຂ້າງ. ເພື່ອເນັ້ນໜັກຄວາມມຸ້ງໝັ້ນດັ່ງກ່າວນີ້, ໃນເດືອນກັນຍາ, ບໍລິສັດ ພູເບ້ຍ ມາຍນິງ ໄດ້ສະໜັບສະໜູນຄະນຕົວແທນຈາກລັດຖະບານລາວຂັ້ນແຂວງ ແລະ ຂັ້ນສູນກາງ ເພື່ອເຂົ້າຮ່ວມກອງປະຊຸມວ່າດ້ວຍການປິດບໍ່ ແລະ ທັດສະນະສຶກສາຢູ່ປະເທດອົດສະຕຣາລີຕາເວັນຕົກ. ຄະນະຕົວແທນຂອງລັດຖະບານ ໄດ້ພົບປະກັບໜ່ວຍງານກໍາກັບດູແລດ້ານການປິດບໍ່ສາກົນ ແລະ ໄດ້ເຫັນຕົວຢ່າງຂອງອົດສະຕຣາລີດ້ວຍຕາຕົນເອງກ່ຽວກັບເຕັກນິກທີ່ເປັນປະຫວັດສາດ ແລະ ໃໝ່ທາງດ້ານການຟື້ນຟູສິ່ງແວດລ້ອມ. ນອກຈາກນັ້ນ ການທັດສະນະສຶກສາຢູ່ອົດສະຕຣາລີຕາວັນຕົກຍັງຢັ້ງຢືນຄວາມມຸ້ງໝັ້ນຂອງບໍລິສັດ ພູເບ້ຍ ມາຍນິງ ໃນການເພີ້ມຄວາມເຂົ້າໃຈຂອງລັດຖະບານລາວໃຫ້ຫຼາຍຂຶ້ນກ່ຽວກັບການດໍາເນີນການຂຸດຄົ້ນ, ການວາງແຜນຂຸດຄົ້ນ ແລະ ກິດຈະກໍາປິດບໍ່ແບບຍືນຍົງທີ່ປະສົມປະສານກັນຂອງບໍລິສັດ.

ໃນລະຫວ່າງເດືອນຕຸລາ, ແຜນງານໂຄສະນາເຜີຍແຜ່ ຂອງບໍລິສັດ ແພນອອສ໌ ກ່ຽວກັບມະເຮັງເຕົ້ານົມຕະຫຼອດເດືອນປະສົບຜົນສໍາເລັດໃນການຮອບຮວມເງິນໄດ້ຫຼາຍກວ່າ $100,000. ການເສີມຂະຫຍາຍແຜນງານໃນປີ 2018 ຂອງບໍລິສັດຊຶ່ງສະໜັບສະໜູນຄວາມສໍາຄັນຂອງການກວດພົບແຕ່ຫົວທີ, ພະນັກງານ ແລະ ຜູ້ຮັບເໝົາ ຂອງບໍລິສັດ ສາມາດເຂົ້າໃຈເລິກເຊິ່ງໃນການສະໜັບສະໜູນສາເຫດດັ່ງກ່າວ. ເງິນກອງທຶນຈະຖືກນໍາໃຊ້ເພື່ອໃຫ້ເງິນອຸດໜູນຄ່າປິ່ນປົວມະເຮັງເຕົ້ານົມ, ຄ່າຢາ ແລະ ຄ່າໃຊ້ຈ່າຍບັງເອີນຕ່າງໆໃຫ້ແກ່ຄົນເຈັບທີ່ດ້ອຍໂອກາດໃນລາວ. ເພີ້ມການເຂົ້າເຖິງການປິ່ນປົວທີ່ມີຄຸນນະພາບໃຫ້ຄົນເຈັບທີ່ຢູ່ໃນນະຄອນຫຼວງວຽງຈັນ ແລະ ເຂດຊົນນະບົດຕ່າງໆ.

ຕາງໜ້າຄະນະຜູ້ບໍລິຫານຂອງບໍລິສັດ ພູເບ້ຍ ມາຍນິງ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງລັດຖະບານລາວ, ພະນັກງານຂອງພວກເຮົາ, ຄູ່ຮ່ວມທຸລະກິດ ແລະ ສະມາຊິກຂອງຊຸມຊົນທ້ອງຖິ່ນຂອງພວກເຮົາ ສໍາລັບການສະໜັບສະໜູນບໍລິສັດຢ່າງຕໍ່ເນື່ອງຂອງພວກເຂົາໃນປີ 2019.

**ປະທານບໍລິສັດ ພູເບ້ຍ ມາຍນິງ, ຈັນເພັງ ບຸນນະຜົນ**

# ການປະກອບສ່ວນ ທາງດ້ານການເງິນໃຫ້ແກ່ປະເທດລາວ

**ການມອບພັນທະທັງໝົດໃນປີ 2019 ໂດຍບໍລິສັດ ພູເບ້ຍ ມາຍນິງ (US$ ລ້ານ):**

| ລາຍການ | | US$ ລ້ານ | |
|---|---|---|---|
| **ການປະກອບສ່ວນ** | **2017** | **2018** | **2019** |
| ອາກອນລາຍໄດ້ສ່ວນບຸກຄົນ (ອາກອນເງິນເດືອນ) | 4.16 | 4.21 | 4.15 |
| ຄ່າທຳນຽມດ່ານພາສີ (ຄ່າທຳນຽມບໍລິການນຳເຂົ້າ) | 1.70 | 2.35 | 1.74 |
| ອາກອນຄ່າທາງ | 4.70 | 4.54 | 4.11 |
| ອາກອນກຳໄລ (ອາກອນລາຍຮັບ) | 25.33 | 28.90 | 23.68 |
| ຄ່າຊັບພະຍາກອນແຮ່ທາດ | 43.81 | 41.01 | 36.92 |
| ຄ່າສຳປະທານ | 0.06 | 0.06 | 0.06 |
| ເງິນປັນຜົນ | 10.50 | 5.35 | 21.00 |
| **ການປະກອບສ່ວນທັງໝົດ** | **90.26** | **86.35** | **91.66** |
| **ລາຄາທອງ (US$/lb)** | **2.84** | **2.88** | **2.74** |

**ການປະກອບສ່ວນໂດຍກົງໃຫ້ແກ່ລາວ (ປະຈຳປີ)**
(US$ ລ້ານ)




**ການປະກອບສ່ວນໂດຍກົງໃຫ້ແກ່ລາວ (ຕົວເລກສະສົມ)**



## ການສ້າງມູນຄ່າທາງດ້ານເສດຖະກິດ

ບໍລິສັດ ພູເບ້ຍ ມາຍນິງ ມີຄວາມມຸ້ງໝັ້ນໃນການປະກອບສ່ວນພັດທະນາເສດຖະກິດ ແລະ ສັງຄົມທີ່ດີໃຫ້ແກ່ລາວ. ຫຼັກການຂອງບໍລິສັດແມ່ນວ່າທຸກຂົງເຂດທີ່ບໍລິສັດເຂົ້າໄປດຳເນີນງານ, ບໍລິສັດຈະເຮັດວຽກຮ່ວມກັບອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນເພື່ອປັບປຸງຊີວິດການເປັນຢູ່ທາງດ້ານເສດຖະກິດ-ສັງຄົມຂອງຂົງເຂດດັ່ງກ່າວ. ຂົງເຂດທີ່ສຸມໃສ່ລວມມີ: ພື້ນຖານໂຄງລ່າງ, ສຸຂະອະນາໄມ, ການສຶກສາ, ກະສິກຳ, ການພັດທະນາທຸລະກິດຂະໜາດນ້ອຍ, ແລະ ການເງິນຈຸລະພາກ.

ບໍລິສັດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດລາວໃນຫຼາຍທາງ, ຊຶ່ງລວມມີຜ່ານ:

- ລາຍຮັບຈາກທອງ, ຄຳ ແລະ ເງິນ ລວມທັງການມອບຄ່າພາສີຊັບພະຍາກອນທຳມະຊາດ.
- ການມອບອາກອນກຳໄລ ແລະ ອື່ນໆ ລວມທັງຄ່າເຊົ່າທີ່ດິນໃຫ້ແກ່ລັດຖະບານລາວ.
- ເງິນເດືອນທີ່ຊຳລະໃຫ້ພະນັກງານ ແລະ ອາກອນເງິນເດືອນໃຫ້ລັດຖະບານຂັ້ນແຂວງ.
- ການຝຶກອົບຮົມ ແລະ ການພັດທະນາທັກສະຂອງພະນັກງານ ແລະ ຊຸມຊົນ ຜ່ານແຜນງານສ້າງຂີດຄວາມສາມາດ.
- ລາຍຈ່າຍລົງທຶນໃນການສຳຫຼວດ, ພັດທະນາໂຄງການ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານໂຄງການ, ເປັນຕົ້ນແມ່ນຜ່ານການຊຳລະຄ່າສິນຄ້າ ແລະ ບໍລິການຂອງຜູ້ສະໜອງລາວ.
- ການລົງທຶນໃນແຜນງານພັດທະນາຊຸມຊົນຜ່ານທຶນພັດທະນາຊຸມຊົນ.
- ການມອບເງິນປັນຜົນໃຫ້ລັດຖະບານລາວ.
- ການລົງທຶນໃນພື້ນຖານໂຄງລ່າງໃນພາກພື້ນລວມມີເສັ້ນທາງ, ນ້ຳລິນ, ສຸຂະພິບານ ແລະ ໂຮງຮຽນ.
- ການອຸປະຖຳ ແລະ ບໍລິຈາກ.
- ການຈັດຊື້ສິນຄ້າ ແລະ ບໍລິການໃນທ້ອງຖິ່ນຈາກຜູ້ຮັບເໝົາ ແລະ ທຸລະກິດຕ່າງໆ.

ບໍລິສັດ ພູເບ້ຍ ມາຍນິງ ຈັດຈ້າງບໍລິສັດທ້ອງຖິ່ນ (ບໍລິສັດລາວ ແລະ ຕ່າງປະເທດປະຈຳລາວ) ເພື່ອຜະລິດສິນຄ້າ ແລະ ບໍລິການ ສຳລັບກິດຈະກຳຕ່າງໆໃນລາວຕາມຄວາມເໝາະສົມ. ໃນການປະຕິບັດດັ່ງກ່າວນັ້ນ, ບໍລິສັດ ພິຈາລະນາການແຂ່ງຂັນທາງການຄ້າ, ປະຫວັດການຄຸ້ມຄອງຄວາມສ່ຽງ ແລະ ຂີດຄວາມສາມາດຂອງຜູ້ຮັບເໝົາເພື່ອຮັບປະກັນວ່າສິນຄ້າ ແລະ ການບໍລິການ ໄດ້ຮັບການສະໜອງໃຫ້ຢ່າງປອດໄພ ແລະ ມີຄວາມຮັບຜິດຊອບ. ນອກຈາກນັ້ນ ກໍ່ຍັງສະໜັບສະໜູນບໍລິສັດທ້ອງຖິ່ນຖ້າຕ້ອງການ ເພື່ອຮັບປະກັນວ່າສາມາດຕອບສະໜອງໄດ້ຕາມມາດຕະຖານດ້ານສຸຂະພາບ ແລະ ຄວາມປອດໄພຂອງບໍລິສັດ.

ໃນລະຫວ່າງປີ 2019, ການປະກອບສ່ວນທາງດ້ານເສດຖະກິດອື່ນໆຂອງບໍລິສັດ ພູເບ້ຍ ມາຍນິງ ໃຫ້ແກ່ລາວ ລວມມີດັ່ງນີ້:

- ການຊຳລະຄ່າສິນຄ້າ ແລະ ບໍລິການປະມານ $185 ລ້ານ ໃຫ້ຜູ້ສະໜອງລາວ; ລາຍຈ່າຍພາຍນອກໃນການຊື້ສິນຄ້າ ແລະ ບໍລິການຫຼາຍກວ່າ 51 ສ່ວນຮ້ອຍ ແມ່ນຊຳລະໃຫ້ບັນດາບໍລິສັດຢູ່ໃນລາວ ແລະ ລັດຖະບານລາວ.
- ປະກອບສ່ວນຫຼາຍກວ່າ $91 ລ້ານໃຫ້ລັດຖະບານລາວ.
- ການປະກອບສ່ວນເຂົ້າໃນແຜນງານສ້າງຂີດຄວາມສາມາດ ແລະ ກິດຈະກຳຕ່າງໆຢູ່ລັດຖະບານຂັ້ນເມືອງ, ແຂວງ ແລະ ລັດຖະບານຢູ່ສູນກາງ.
- ການດຳເນີນແຜນງານອຸປະຖຳ ແລະ ບໍລິຈາກໃນລາວ (ເຊິ່ງເພີ້ມເຂົ້າໃນໂຄງການພັດທະນາຊຸມຊົນ), ການບໍລິຈາກເງິນຈຳນວນ $57,156 ໃຫ້ຜູ້ຮັບຈາກຫຼາຍຂະແໜງ ຜ່ານການບໍລິຈາກເປັນເງິນສົດ ແລະ ເປັນວັດຖຸປັດໃຈ.
- ລາຍຮັບຂອງບໍລິສັດ ພູເບ້ຍ ມາຍນິງ ຈຳນວນ $635 ລ້ານ ສຳລັບການຂາຍ (ແລະ ສົ່ງອອກ) ທອງ, ຄຳ ແລະ ເງິນ ໃນປີ 2019 ຄິດເປັນ 13 ສ່ວນຮ້ອຍຂອງການສົ່ງອອກສິນຄ້າຂອງລາວທັງໝົດ.

# ການທົບທວນ ດ້ານການດຳເນີນງານ

**ໂຄງການຂອງບໍລິສັດໃນລາວ ໄດ້ຮັກສາຜົນໄດ້ຮັບດ້ານການຜະລິດຢ່າງເຂັ້ມແຂງ ແລະ ປະຢັດຄ່າໃຊ້ຈ່າຍຕະຫຼອດປີ 2019 ຢ່າງສະໝ່ຳສະເໝີ.**

## ໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ

ໂຄງການຂຸດຄົ້ນ-ປຸງແຕ່ງທອງ-ຄຳ ພູຄຳ ແມ່ນຕັ້ງຢູ່ເຂດສຳປະທານພູເບ້ຍ ຂອງບໍລິສັດ ແພນອອສ໌ ທາງພາກເໜືອຂອງລາວທີ່ມີທັງໝົດ 2,600 ກິໂລຕາແມັດ, ປະມານ 140 ກິໂລແມັດຈາກເມືອງຫຼວງ, ນະຄອນຫຼວງວຽງຈັນ. ໂຄງການ ພູຄຳ ເປັນແຫຼ່ງສະໜອງລາຍຮັບທີ່ສຳຄັນຂອງ ບໍລິສັດ.

### ຜົນການຜະລິດ

ໂຄງການ ພູຄຳໄດ້ມີຜົນການຜະລິດທີ່ເຂັ້ມແຂງ ແລະ ມີການດຳເນີນດ້ານຄ່າໃຊ້ຈ່າຍທີ່ດີໃນປີ 2019 ໂດຍການຜະລິດທອງໃນແຮ່ເຂັ້ມຂຸ້ນປະຈຳປີບັນລຸໄດ້ 69,284 ໂຕນ. ການຜະລິດຄຳ 64,128 ອອນ ແລະ ເງິນ 377,017 ອອນ.

ປະສິດທິພາບການຜະລິດທອງສະເລັ່ຍໄດ້ 80.6 ສ່ວນຮ້ອຍ, ເປັນຜົນມາຈາກຄຸນນະພາບແຮ່ ແລະ ຄຸນນະພາບແຮ່ບົດປັບປຸງດີຂຶ້ນ, ລວມທັງຄວາມທັນສະໄໝໃນການຄວບຄຸມຂະບວນການຜະລິດ ແລະ ການປະຕິບັດງານພາຍໃນວົງຈອນໂມ້ບົດ ແລະ ສະກັດແບບຟູລອຍ.

### ຕົ້ນທຶນ

ຕົ້ນທຶນເງິນສົດ C1* ໂດຍສະເລ່ຍ ໃນປີ 2019 ແລະ ຕົ້ນທຶນໝົດບໍລິສັດ (AISC**) ຂອງທອງແມ່ນ $1.19/ປອນ ແລະ $1.73/ປອນຕາມລຳດັບ.

### ການຂຸດຄົ້ນ ແລະ ການຜະລິດ-ປຸງແຕ່ງ

ການດຳເນີນການຜະລິດ ໄດ້ດຳເນີນເປັນຢ່າງດີ ເພາະແຮ່ສືບຕໍ່ແຂງໃນຫຼາຍຊັ້ນດິນຂອງບໍ່ຂຸດຄົ້ນແບບເປີດ. ປະລິມານຂຸດຄົ້ນທັງໝົດແມ່ນ 47 ລ້ານໂຕນ ແລະ ສາມາດປ້ອນແຮ່ໄດ້ 21 ລ້ານໂຕນ ແລະ ແຮ່ທີ່ໄດ້ຮັບການປຸງແຕ່ງແມ່ນຫຼາຍກວ່າ 18 ລ້ານໂຕນ.

## ໂຄງການຂຸດຄົ້ນ-ປຸງແຕ່ງ ຄຳ-ເງິນ ບ້ານຫ້ວຍຊາຍ

ໂຄງການຂຸດຄົ້ນ-ປຸງແຕ່ງ ຄຳ-ເງິນ ບ້ານຫ້ວຍຊາຍ ຕັ້ງຢູ່ທາງທິດຕາເວັນຕົກຂອງໂຄງການ ພູຄຳ ປະມານ 25 ກິໂລແມັດ ໃນເຂດສຳປະທານຂອງບໍລິສັດ ຢູ່ທາງທິດເໜືອຂອງລາວ. ໂຄງການ ບ້ານຫ້ວຍຊາຍໄດ້ດຳເນີນງານເຕັມປີ ເປັນປີທີເຈັດໃນປີ 2019. ໂຮງງານໄດ້ບັນລຸຕົ້ນທຶນ 1 ແລະ AISC.

### ຜົນການຜະລິດ

ໂຮງງານຜະລິດຄຳໄດ້ທັງໝົດ 103,289ອອນ ແລະ ເງິນ 730,344ອອນ (ໃນຮູບແບບຄຳ-ເງິນ ແທ່ງປະສົມ).

### ຕົ້ນທຶນ

ຕົ້ນທຶນເງິນສົດ C1 ໂດຍສະເລ່ຍໃນການຜະລິດຄຳແມ່ນ $720/ອອນ ພາຍຫຼັງບວກລາຍຮັບຈາກການຂາຍຄຳ-ເງິນ. ຕົ້ນທຶນໝົດບໍລິສັດສຳລັບຜະລິດຄຳແມ່ນ $919/ອອນ.

### ການຂຸດຄົ້ນ ແລະ ການຜະລິດ-ປຸງແຕ່ງ

ໂຄງການ ບ້ານຫ້ວຍຊາຍ ໄດ້ບັນລຸການຜະລິດລື່ນຄາດໝາຍໃນໄລຍະປີດັ່ງກ່າວ. ປະລິມານຂຸດຄົ້ນແຮ່ລວມທັງໝົດ 14.5 (Mt) ລ້ານໂຕນ ແລະ ລວມທັງປະລິມານແຮ່ຈຳນວນ 4.8 (Mt) ລ້ານໂຕນ. ແຮ່ທີ່ໄດ້ຮັບການປຸງແຕ່ງແມ່ນຫຼາຍກວ່າ 5 ລ້ານໂຕນ.

## ການສຳຫຼວດໃນເຂດສຳປະທານ

ວຽກງານຂຸດເຈາະໃກ້ບໍ່ ໄດ້ສຳເລັດຢູ່ໂຄງການ ພູຄຳ ໃນປີ 2019. ຜົນການຂຸດເຈາະໄດ້ນຳມາປະເມີນຄວາມເປັນໄປໄດ້ໃນການຂະຫຍາຍອາຍຸໂຄງການ ໄດ້ມີການຂຸດເຈາະໃນບໍ່ ແລະ ການຂະຫຍາຍເນື້ອທີ່ ໄດ້ດຳເນີນຢູ່ໂຄງການ ບ້ານຫ້ວຍຊາຍ ໃນປີ 2019.

ບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນສຳລັບໂຄງການ KTL ສຳເລັດໃນປີ 2019.

## ການຈັດການ ແລະ ດູແລຜະລິດຕະພັນ

ບໍລິສັດ ພູເບ້ຍ ມາຍນິງ ຜະລິດແຮ່ທອງເຂັ້ມຂຸ້ນ ຊຶ່ງຂາຍໂດຍກົງໃນເອເຊຍ ໃຫ້ໂຮງຫຼອມຕ່າງປະເທດ ຫຼື ຜ່ານຜູ້ປະກອບການຄ້າ. ຄຳ-ເງິນ ແທ່ງປະສົມ ແມ່ນຂາຍໃຫ້ໂຮງງານສະກັດແຮ່ໂດຍກົງ. ເນື່ອງຈາກປະລິມານຂອງຜະລິດຕະພັນຕິດພັນກັບຂະໜາດຂອງຕະຫຼາດໂດຍລວມ, ບໍລິສັດ ໄດ້ຈຳກັດການກຳນົດຜູ້ຊື້ປາຍທາງ ຫຼື ຜະລິດຕະພັນສຸດທ້າຍ (ທອງແຜ່ນ ຫຼື ໂລຫະມີຄ່າທີ່ຜ່ານການສະກັດ). ໃນເວລາເຮັດສັນຍາຂາຍໂດຍກົງກັບໂຮງຫຼອມ, ໄດ້ມີການກວດສອບຖານທຸລະກິດເພື່ອຮັບປະກັນຊື່ສຽງຂອງລູກຄ້າ, ຄວາມສາມາດທາງດ້ານການເງິນ, ແລະ ໂຄງສ້າງທາງດ້ານກົດໝາຍ ແລະ ທຸລະກິດ. ສັນຍາຕ່າງໆແມ່ນອີງຕາມຂໍ້ກຳນົດ ແລະ ເງື່ອນໄຂມາດຕະຖານຂອງບໍລິສັດ ພູເບ້ຍ ມາຍນິງ. ທຸກການຂາຍແມ່ນຮັບປະກັນໂດຍການຊຳລະເງິນກ່ອນລ່ວງໜ້າ ຫຼື ໜັງສືສິນເຊື່ອ.

ວິທີຈັດການ ແລະ ດູແລຜະລິດຕະພັນຂອງບໍລິສັດ ພູເບ້ຍ ມາຍນິງ ສຸມໃສ່ການເກັບຮັກສາ ແລະ ຂົນສົ່ງແຮ່ທອງເຂັ້ມຂຸ້ນຈາກບໍ່ຂຸດຄົ້ນ ໄປຫາທ່າເຮືອຢູ່ຫວຽດນາມ ແລະ ໄທ ຜ່ານການນຳສົ່ງຜະລິດຕະພັນທີ່ປອດໄພ ແລະ ປະສົບຜົນສຳເລັດໃນແບບວິທີຕ່າງໆ ຊຶ່ງຕອບສະໜອງຕາມຂໍ້ກຳນົດຂອງລູກຄ້າ ແລະ ຂໍ້ກຳນົດພາຍໃນປະເທດ.

ບໍລິສັດ ເປັນເຈົ້າຂອງ ແລະ ດຳເນີນການຂົນສົ່ງດ້ວຍລົດຂົນສົ່ງຂອງບໍລິສັດເອງສຳລັບການເຄື່ອນຍ້າຍແຮ່ເຂັ້ມຂຸ້ນໃນລາວ. ມີລະບົບການຄຸ້ມຄອງ ແລະ ຂັ້ນຕອນກວດສອບກ່ຽວຂ້ອງ ຊຶ່ງເປັນສ່ວນສຳຄັນຕໍ່ວິທີການຈັດການ ແລະ ດູແລຜະລິດຕະພັນ ແລະ ລະບົບດັ່ງກ່າວລວມມີການກວດກາ ແລະ ຕິດຕາມດ້ວຍລະບົບກຳນົດຕຳແໜ່ງ (GPS). ການນຳໃຊ້ລົດນຳໜ້າຂະບວນຕາມຈຸດທີ່ມີຄວາມສ່ຽງສູງຂອງເສັ້ນທາງແກ່ແຮ່ ຊ່ວຍເພີ່ມຄວາມປອດໄພຕາມທ້ອງຖະໜົນ ແລະ ຫຼຸດຜ່ານຄວາມສ່ຽງຂອງແຮ່ເຂັ້ມຂຸ້ນຕົກເຮ່ຍ.

ແຮ່ທອງ-ຄຳ ເຂັ້ມຂຸ້ນຂອງບໍລິສັດ ພູເບ້ຍ ມາຍນິງ ແມ່ນໄດ້ຖືກຮັບຮູ້ຈາກຕະຫຼາດວ່າເປັນຜະລິດຕະພັນທີ່ສະອາດດີ ແລະ ຂໍ້ກຳນົດທາງດ້ານໂລຫະຂອງຜະລິດຕະພັນຖືກລວມເຂົ້າໃນຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາກັບລູກຄ້າຕ່າງປະເທດ. ບໍລິສັດໄດ້ປະຕິບັດຕາມຂໍ້ກຳນົດຂອງສັນຍາຕາມການຕົກລົງເຫັນດີ ຊຶ່ງນຳໃຊ້ກັບການສົ່ງຜະລິດຕະພັນທາງເຮືອໃນໄລຍະປີ 2019. ສ່ວນທາດອື່ນທີ່ມີປະລິມານນ້ອຍ, ລວມທັງສານໜູ, ແມ່ນປະຕິບັດຕາມຂໍ້ຈຳກັດສູງສຸດຂອງປະເທດປາຍທາງ. ບໍລິສັດໃກ້ຊິດຕິດແທດເປັນປະຈຳ ແລະ ໂດຍກົງກັບລູກຄ້າຂອງບໍລິສັດຜ່ານກອງປະຊຸມອຸດສາຫະກຳ ແລະ ການຢ້ຽມຢາມຫ້ອງການ ຫຼື ເຂດພາກສະໜາມ.

* ບໍລິສັດທີ່ປຶກສາດ້ານພະລັງງານ ແລະ ໂລຫະທາດ (Brook Hunt Convention) ກ່ຽວກັບການລາຍງານຕົ້ນທຶນການຜະລິດໂດຍກົງ ເຊິ່ງປະກອບມີ: ສະຖານທີ່ຕັ້ງໂຮງງານ, ການຂົນສົ່ງຜະລິດຕະພັນ ແລະ ຈັດສົ່ງ, ຄ່າບຳບັດ ແລະ ກັ່ນແຮ່ ແລະ ຄ່າໃຊ້ຈ່າຍດ້ານການຕະຫຼາດ; ໂດຍອີງຕາມລາຍຈ່າຍທີ່ຈະເກີດຂຶ້ນຂອງໂລຫະທາດ ຫຼັງຈາກການຂາຍແຮ່ຕິດພັນ.

** ຕົ້ນທຶນການຜະລິດທັງໝົດ (AISC) ແມ່ນຕົ້ນທຶນ C1 ບວກກັບຕົ້ນທຶນທາງອ້ອມ (ການແບ່ງສ່ວນຕົ້ນທຶນການບໍລິການແບບລວມສູນ ແລະ ການສະໜັບສະໜູນຂອງສຳນັກງານໃຫຍ່ຂອງບໍລິສັດຢູ່ເມືອງບຣິສ໌ເບີນ); ຄ່າພາສີສຳປະທານ;ຕົ້ນທຶນລວມ; ຄ່າເຊົ່າສຳປະທານ ແລະ ຄ່າທຳນຽມດອກເບ້ຍ; ແລະ ທຶນດ້ານການດັດປັບສິນຄ້າຄົງເຫຼືອ ແລະ ການຂຸດຄົ້ນທີ່ເລື່ອນອອກໄປ.

# ກໍລະນີສຶກສາ

## ລາງວັນຍ້ອງຍໍບໍລິສັດ ພູເບ້ຍ ມາຍນິງ ແລະ ບໍລິສັດ ແພນອອສ໌ ໃນເອທີສາກົນ




ຮູບດ້ານເທິງ: (ຊ້າຍ ຫາ ຂວາ) ປະທານບໍລິສັດ ພູເບ້ຍ ມາຍນິງ, ຈັນເພັງ ບຸນນະຜົນ ແລະ ຜູ້ຈັດການພະແນກພົວພັນລັດຖະບານ, ວັນນະລີ ພູນສະຫວັດ ຂຶ້ນຮັບ 'ລາງວັນແຮ່ທາດອາຊຽນ - ການປະຕິບັດດີທີ່ສຸດໃນການພັດທະນາແຮ່ທາດແບບຍືນຍົງ (ການປຸງແຕ່ງແຮ່ທາດທີ່ເປັນໂລຫະ)' ຈາກຮອງລັດຖະມົນຕີກະຊວງອຸດສາຫະກຳໄທ, ພະນະທ່ານ ທີຣະຍຸດ ວານິດຊັງ ຢູ່ທີ່ພິທີມອບ-ຮັບລາງວັນແຮ່ທາດອາຊຽນຄັ້ງທີ 2, ຊຶ່ງຈັດຂຶ້ນຢູ່ໂຮງແຮມ Pullman Bangkok King Power, ປະເທດໄທ 13 ທັນວາ 2019

ໃນປີ 2019, ບໍລິສັດ ພູເບ້ຍ ມາຍນິງ ແລະ ບໍລິສັດແມ່, ແພນອອສ໌ ຈຳກັດ ມີຄວາມພາກພູມໃຈທີ່ໄດ້ຮັບລາງວັນຍ້ອງຍໍໃນເອທີສາກົນ ສອງລາງວັນ ສຳລັບການປະຕິບັດແບບຍືນຍົງ ແລະ ມີນະວັດຕະກຳໃຫມ່ ໃນການຜະລິດ-ປຸງແຕ່ງແຮ່ທາດ.

ໃນເດືອນພຶດສະພາ, ບໍລິສັດ ແພນອອສ໌ ໄດ້ຮັບ 'ລາງວັນນະວັດຕະກຳຂອງນັກຂຸດຄົ້ນບໍ່ແຮ່' ຢູ່ທີ່ 'ງານວາງສະແດງ ກອງປະຊຸມວ່າດ້ວຍນະວັດຕະກຳບໍ່ແຮ່ 2019' ຂອງ Austmine ໃນເມືອງບຣິສ໌ເບັນ, ອົດສະຕຣາລີ. ລາງວັນນີ້ແມ່ນຍ້ອງຍໍການແກ້ໄຂບັນຫາທີ່ມີຫົວຄິດປະດິດສ້າງ - 'ການຢອງຖັງນ້ຳມັນໃສ່ຫຼັງລົດບັນທຸກຂາກັບ' - ຊຶ່ງນຳໃຊ້ປະໂຫຍດຈາກລົດແກ່ແຮ່ເຂັ້ມຂຸ້ນເປົ່າຂາກັບ ເພື່ອຂົນສົ່ງນ້ຳມັນໄປ ແລະ ກັບຈາກໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ.

ຖັງທີ່ສູງເຄິ່ງໜຶ່ງ, ສັ່ງເຮັດພິເສດ ຖືກເຕີມດ້ວຍນ້ຳມັນ ແລະ ຂົນໃສ່ລົດໄວ້ຢູ່ກ້ອງຕູ້ຄອນເທັນເນີແຮ່ເຂັ້ມຂຸ້ນເປົ່າ ແລະ ບັນທຸກຈາກບ້ານທວາຍ ໄປຫາໂຄງການ ພູຄຳ. ຫຼັງຈາກມາຮອດໂຄງການ ພູຄຳ, ຄົນຂັບລົດ ຈະປ່ອຍນ້ຳມັນອອກໄວ້ຢູ່ສາງນ້ຳມັນ ແລະ ເດີນທາງໄປເຂດໂຮງງານຜະລິດ-ປຸງແຕ່ງ ເພື່ອເອົາແຮ່ເຂັ້ມຂຸ້ນ. ຫຼັງຈາກນັ້ນ ຖັງເປົ່າທີ່ສູງເຄິ່ງໜຶ່ງນັ້ນ ກໍ່ຈະຢອງໄວ້ເທິງຕູ້ຄອນເທັນເນີແຮ່ເຂັ້ມຂຸ້ນທີ່ບັນຈຸເຕັມ ເພື່ອເດີນທາງກັບໄປບ້ານທວາຍ.

ໃນເດືອນທັນວາ, ບໍລິສັດ ພູເບ້ຍ ມາຍນິງ ໄດ້ຮັບຮອງຊະນະເລີດສຳລັບລາງວັນ 'ການປະຕິບັດດີທີ່ສຸດໃນການພັດທະນາແຮ່ທາດແບບຍືນຍົງ (ການປຸງແຕ່ງແຮ່ທາດທີ່ເປັນໂລຫະ)' ຢູ່ທີ່ພິທີມອບ-ຮັບລາງວັນແຮ່ທາດອາຊຽນ, ຊຶ່ງຈັດຂຶ້ນຢູ່ບາງກອກ, ປະເທດໄທ.

'ລາງວັນແຮ່ທາດອາຊຽນ' ຍ້ອງຍໍບັນດາບໍລິສັດບໍ່ແຮ່ໃນອາຊຽນ ທີ່ໄດ້ປະກອບສ່ວນອັນພົ້ນເດັ່ນເຂົ້າໃນການສົ່ງເສີມການພັດທະນາແຮ່ທາດແບບຍືນຍົງຢູ່ຂົງເຂດອາຊີຕະເວັນອອກສ່ຽງໃຕ້. ບໍລິສັດ ພູເບ້ຍ ມາຍນິງ ໄດ້ຮັບການຍ້ອງຍໍສຳລັບຄວາມມຸ້ງໝັ້ນອັນຕໍ່ເນື່ອງ ແລະ ເພີ້ມຂຶ້ນຕໍ່ການປະຕິບັດທີ່ດີທີ່ສຸດ ແລະ ມີມາດຕະຖານສູງໃນການປຸງແຕ່ງແຮ່ທາດຢູ່ໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ ໃນລາວ.

ການໄດ້ຮັບລາງວັນເຫຼົ່ານີ້ໃນປີ 2019 ເປັນສ່ວນສຳຄັນຂອງຄວາມສຳເລັດຂອງອົງປະກອບທຸລະກິດຂອງບໍລິສັດ ຊຶ່ງເຫັນຄຸນນະທຳຂອງພະນັກງານ, ຄວາມປອດໄພ, ການຄຸ້ມຄອງສິ່ງແວດລ້ອມ, ສາຍພົວພັນກັບຊຸມຊົນ ແລະ ການມີສ່ວນຮ່ວມກັບລັດຖະບານຂອງບໍລິສັດ ກໍ່ຄືການຜະລິດທີ່ເປັນວັດຖຸເຊັ່ນ ທອງ ແລະ ຄຳ..



ຮູບດ້ານລຸ່ມ: ລົດບັນທຸກແລ່ນໄປໂຄງການຂຸດຄົ້ນ-ປຸງແຕ່ງ ທອງ-ຄຳ ພູຄຳ ຊຶ່ງຫຼັງລົດແມ່ນມີຖັງນ້ຳມັນທີ່ບັນຈຸເຕັມ (ກ້ອງສຸດ) ແລະ ຕູ້ຄອນເທັນເນີແຮ່ເຂັ້ມຂຸ້ນເປົ່າ (ເທິງສຸດ)

# ການປະຕິບັດ ວຽກງານດ້ານສັງຄົມ

**ແຜນງານພັດທະນາຊຸມຊົນຂອງບໍລິສັດ ສະໜັບສະໜູນບ້ານທີ່ເປັນເຈົ້າພາບຂອງການຂຸດຄົ້ນ, ວຽກງານສຳຫຼວດ, ແລະ ຕາມເສັ້ນທາງຂົນສົ່ງແຮ່ໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດໂດຍປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມກ້າວໜ້າດ້ານເສດຖະກິດ.**

ໂຄງການພັດທະນາຊຸມຊົນ ໄດ້ຮັບການຄຸ້ມຄອງໂດຍຮ່ວມມືກັບບັນດາຊຸມຊົນທ້ອງຖິ່ນ ແລະ ປະສານສົມທົບຢ່າງໃກ້ຊິດກັບອຳນາດການປົກຄອງຂອງລັດຖະບານຂັ້ນແຂວງໃນທ້ອງຖິ່ນ. ທຶນພັດທະນາຊຸມຊົນເຫຼົ່ານີ້ (CDFs) ແມ່ນສອດຄ່ອງກັບເປົ້າໝາຍ ແລະ ຍຸດທະສາດການພັດທະນາແຫ່ງຊາດ - ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງໄຊສົມບູນ, ແລະ ໄດ້ຮັບການປັບປຸງໂດຍມີການປຶກສາຫາລືກັບບ້ານທ້ອງຖິ່ນ ແລະ ພະນັກງານຂັ້ນເມືອງ ແລະ ຂັ້ນແຂວງ. ຂົງເຂດທີ່ສຸມໃສ່ລວມມີພື້ນຖານໂຄງລ່າງ, ສຸຂະອະນາໄມ, ການສຶກສາ, ກະສິກຳ, ການພັດທະນາທຸລະກິດຂະໜາດນ້ອຍ ແລະ ການເງິນຈຸລະພາກ.

ໃນປີ 2019, ມີທັງໝົດ 24 ໂຄງການ ໂດຍມີບົດບັນທຶກຄວາມເຂົ້າໃຈລະຫວ່າງບໍລິສັດ ພູເບ້ຍ ມາຍນິງ ແລະ ອຳນາດການປົກຄອງແຂວງໄຊສົມບູນ ຊຶ່ງກຳນົດການປະສານສົມທົບ ແລະ ການຈັດການຄຸ້ມຄອງຕ່າງໆ. ໂຄງການ ທີ່ວາງແຜນໄວ້ ແຕ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດໃນທຸກປີງົບປະມານ ໄດ້ຮັບການຈັດຕັ້ງປະຕິບັດໃນປີດັ່ງກ່າວໂດຍທັນທີ ເວັ້ນແຕ່ໄດ້ມີການຕົກລົງຮ່ວມກັນຕ່າງຫາກລະຫວ່າງລັດຖະບານລາວ ແລະ ບໍລິສັດ ພູເບ້ຍ ມາຍນິງ.

## ການສະໜອງທາງດ້ານພື້ນຖານໂຄງລ່າງ

ບໍລິສັດ ພູເບ້ຍ ມາຍນິງ ໄດ້ປະກອບສ່ວນຢ່າງມະຫາສານເຂົ້າໃນການສ້າງ, ບຳລຸງຮັກສາ ແລະ ປັບປຸງພື້ນຖານໂຄງລ່າງໃນລາວ. ໃນນີ້ລວມມີສະຖານທີ່ທາງການແພດ ແລະ ການສຶກສາ, ພື້ນຖານໂຄງລ່າງທາງດ້ານຕຶກອາຄານອື່ນໆ, ການພັດທະນາ ແລະ ການບຳລຸງຮັກສາເສັ້ນທາງ, ແລະ ລະບົບນ້ຳປະປາ ແລະ ສຸຂະພິບານ. ບໍລິສັດ ສະໜອງໂຄງການພື້ນຖານໂຄງລ່າງໃຫ້ໄດ້ຫຼາຍເທົ່າທີ່ຈະເປັນໄປໄດ້ ໂດຍການຮ່ວມມືກັບລັດຖະບານ ແລະ ບັນດາຊຸມຊົນທ້ອງຖິ່ນ. ພາຍໃຕ້ແບບໂຄງສ້າງ ພື້ນຖານໂຄງລ່າງທີ່ກໍ່ສ້າງໂດຍຊຸມຊົນ ນີ້, ບໍລິສັດ ພູເບ້ຍ ມາຍນິງ ຈັດຊື້ວັດຖຸອຸປະກອນສຳລັບໂຄງການຕ່າງໆ ແລະ ສະມາຊິກຊຸມຊົນທ້ອງຖິ່ນ, ຖ້າເໝາະສົມ ແລະ ໄດ້ຮັບການຊີ້ນຳຈາກອຳນາດການປົກຄອງທ້ອງຖິ່ນ ແລະ ພະນັກງານຂອງບໍລິສັດ, ປະຕິບັດໂຄງການດັ່ງກ່າວໃຫ້ສຳເລັດດ້ວຍຕົວຂອງພວກເຂົາເອງ.

ໃນປີ 2019, ການປັບປຸງພື້ນຖານໂຄງລ່າງ ລວມມີການບຳລຸງຮັກສາ ແລະ ສ້ອມແປງ ຢູ່ໂຮງຮຽນປະຖົມ, ຫ້ອງການຊຸມຊົນ ແລະ ສຸກສາລາ ຢູ່ນ້ຳໂມ້ ແລະ ນ້ຳຍອນ ແລະ ໂຮງຮຽນມັດທະຍົມນ້ຳໂມ້.

## ການເບິ່ງແຍງສຸຂະພາບຂອງຊຸມຊົນ

ໃນປີ 2019, ບໍລິສັດ ພູເບ້ຍ ມາຍນິງ ປະກອບສ່ວນເງິນຈຳນວນ US$22,410 ເຂົ້າໃນການປັບປຸງຜົນທາງດ້ານສຸຂະອະນາໄມໃຫ້ດີຂຶ້ນໃນຊຸມຊົນທ້ອງຖິ່ນທີ່ຢູ່ໃກ້ໂຄງການ ລວມມີນ້ຳໂມ້, ນ້ຳຍອນ ແລະ ນາໄຊສະຫວ່າງ.

ບໍລິສັດ ໄດ້ຈັດການໂຄສະນາເຜີຍແຜ່ກ່ຽວກັບສຸຂະພາບຊຸມຊົນ ຮ່ວມກັບລັດຖະບານລາວ ຢູ່ນ້ຳໂມ້ ແລະ ນ້ຳຍອນ. ນອກຈາກນັ້ນ ກໍ່ໄດ້ຈັດການຝຶກອົບຮົມພະຍາບານ ຢູ່ນ້ຳໂມ້ ແລະ ນ້ຳຍອນ, ແລະ ພະຍາບານທີ່ເຮັດວຽກຢູ່ສຸກສາລາຊຸມຊົນ ຢູ່ນາໄຊສະຫວ່າງ ໄດ້ເຂົ້າຮ່ວມການຝຶກອົບຮົມດັ່ງກ່າວຢູ່ສຸກສາລາຊຸມຊົນບ້ານນ້ຳໂມ້.

ສຳເລັດໂຄງການດື່ມນ້ຳ 'ສະອາດ ແລະ ປອດໄພ' ໄດ້ຈັດຂຶ້ນຢູ່ໂຮງຮຽນປະຖົມ ແລະ ມັດທະຍົມ ບ້ານນາໄຊສະຫວ່າງ ແລະ ສຸກສາລາຊຸມຊົນຂອງບ້ານ ໃນໄລຍະປີດັ່ງກ່າວ.

## ການສຶກສາ

ແຜນງານດ້ານການສຶກສາຂອງບໍລິສັດ ພູເບ້ຍ ມາຍນິງ ແນ່ໃສ່ເພື່ອປັບປຸງຜົນການຮຽນສຳລັບເດັກນ້ອຍ ແລະ ຜູ້ໃຫຍ່ ໃນຊຸມຊົນທ້ອງຖິ່ນ. ໂຄງການຕ່າງໆໄດ້ສຸມໃສ່ປັບປຸງການເຂົ້າເຖິງການສຶກສາຂັ້ນປະຖົມຂອງເດັກນ້ອຍ ໂດຍຜ່ານ: ການກໍ່ສ້າງໂຮງຮຽນ, ການສະໜອງຊຸດນັກຮຽນ ແລະ ອຸປະກອນການຮຽນ, ທຶນການສຶກສາ, ໃຫ້ການວັດແທກຕ່າງໆເພື່ອປັບປຸງຄຸນນະພາບຂອງການສຶກສາ ຜ່ານການຝຶກອົບຮົມຄູສອນ, ແລະ ໃຫ້ການຊ່ວຍເຫຼືອໃນການສິດສອນ. ນັບຕັ້ງແຕ່ປີ 2006, ບໍລິສັດ ພູເບ້ຍ ມາຍນິງ ໄດ້ປະກອບສ່ວນເຂົ້າໃນການກໍ່ສ້າງ, ຕໍ່ເຕີມ ແລະ/ຫຼື ປັບປຸງ 19 ໂຮງຮຽນໃນລາວ, ໂດຍວິທີດັ່ງກ່າວ ໄດ້ປັບປຸງການເຂົ້າເຖິງການສຶກສາໂດຍກົງໃຫ້ນັກຮຽນເກືອບເຖິງ 1,700 ຄົນ.

**ໃນປີ 2019, ບໍລິສັດ ໄດ້ປະກອບສ່ວນເງິນຈຳນວນ US$36,978 ເຂົ້າໃນແຜນລິເລີ່ມຕ່າງໆຊຶ່ງກຳນົດເພື່ອເພີ່ມການເຂົ້າເຖິງການສຶກສາ ແລະ ຄຸນນະພາບຂອງການຮ່ຳຮຽນຢູ່ພາຍໃນຊຸມຊົນທີ່ຢູ່ໃກ້ກັບໂຄງການຕ່າງໆຂອງບໍລິສັດ.**

ແຜນງານໄດ້ປະສານສົມທົບຢ່າງໃກ້ຊິດກັບຫ້ອງການສຶກສາທິການ ແລະ ກິລາເມືອງອະນຸວົງ ລວມມີ: ການກໍ່ສ້າງຫ້ອງປະຊຸມຂອງໂຮງຮຽນ ແລະ ຫ້ອງນ້ຳ ຢູ່ນ້ຳໂມ້. ການກໍ່ສ້າງໂຮງຮຽນອະນຸບານ, ການຕໍ່ເຕີມຫໍພັກຄູ ແລະ ການປັບປຸງເພີ່ມເຕີມຕ່າງໆໃຫ້ໂຮງຮຽນປະຖົມຢູ່ນ້ຳຍອນ. ໂຄງການຮຽນຍາມພັກແລ້ງ ໄດ້ສ້າງຕັ້ງຂຶ້ນຢູ່ທັງສອງບ້ານ ແລະ ສຳເລັດການກໍ່ສ້າງຫໍພັກຄູ ແລະ ພະຍາບານ ແລະ ຫ້ອງນ້ຳ ຢູ່ນາໄຊສະຫວ່າງ ພາຍໃຕ້ການຊີ້ນຳຂອງອຳນາດການປົກຄອງແຂວງໄຊສົມບູນ ເມືອງອະນຸວົງ.

## ການພັດທະນາວິສາຫະກິດ (ການສະໜັບສະໜູນທຸລະກິດທ້ອງຖິ່ນ) ແລະ ການເງິນຈຸລະພາກ

ໃນປີ 2019, ບໍລິສັດ ພູເບ້ຍ ມາຍນິງ ໄດ້ຊື້ສິນຄ້າບໍລິໂພກຈຳນວນ US$971,839 ຈາກທຸລະກິດຊຸມຊົນຂະໜາດນ້ອຍຜະລິດສິນຄ້າບໍລິໂພກເຊັ່ນ: ຜັກ, ນ້ຳດື່ມ, ໄຂ່, ຖົງຜ້າ, ໝາກໄມ້ ແລະ ປາ. ການຝຶກອົບຮົມດ້ານກະສິກຳ ໄດ້ຈັດໃຫ້ປະຊາຊົນທ້ອງຖິ່ນເພື່ອປັບປຸງຄຸນນະພາບ ແລະ ຄວາມຫຼາກຫຼາຍຂອງຜົນຜະລິດ, ແລະ ການສ້າງຄວາມສາມາດໃນການລ້ຽງສັດ.

### ການສ້າງລາຍໄດ້ຈາກແຜນລິເລີ່ມທຸລະກິດຂະໜາດນ້ອຍ (US$)

| ຜະລິດຕະພັນ | 2017 | 2018 | 2019 |
|---|---|---|---|
| ຜັກ, ນ້ຳດື່ມ, ໄຂ່, ຖົງຜ້າ, ໝາກໄມ້ ແລະ ປາ | US$1,041,799 | US$1,084,351 | US$971,839 |

## ການເຂົ້າເຖິງການບໍລິການທາງດ້ານການເງິນ

ນັບແຕ່ປີ 2010 ເປັນຕົ້ນມາ, ບໍລິສັດໄດ້ຊ່ວຍເຫຼືອ 12 ຊຸມຊົນທ້ອງຖິ່ນເພື່ອຈັດຕັ້ງແຜນການເງິນຈຸລະພາກໂດຍຜ່ານກອງທຶນການອອມ ແລະ ສິນເຊື່ອ. ກອງທຶນດັ່ງກ່າວເຮັດໃຫ້ປະຊາຊົນເຂົ້າເຖິງການອຳນວຍຄວາມສະດວກດ້ານການອອມ ແລະ ກູ້ຢືມເງິນທີ່ຍັງຈຳກັດຢູ່ໃນເຂດຊົນນະບົດ.

ສະມາຊິກສາມາດກູ້ຢືມເງິນເພື່ອສະໜັບສະໜູນເຂົ້າໃນກິດຈະການສ້າງລາຍຮັບຂະໜາດນ້ອຍທີ່ຫຼາກຫຼາຍ ລວມທັງ ຄ່າໃຊ້ຈ່າຍໃນຄົວເຮືອນເຊັ່ນ: ການສຶກສາ ແລະ ການເບິ່ງແຍງສຸຂະພາບ. ຄະນະກຳມະການຄຸ້ມຄອງຂັ້ນບ້ານ ຈະໃຫ້ການຄວບຄຸມດູແລທຶນດັ່ງກ່າວ ແລະ ຊີ້ນຳໂດຍຄະນະກຳມະການຊີ້ນຳຂັ້ນເມືອງ, ຊຶ່ງຄຸ້ມຄອງໂດຍສະຫະພັນແມ່ຍິງລາວ.

ບໍລິສັດ ພູເບ້ຍ ມາຍນິງ ເຮັດວຽກຢ່າງໃກ້ຊິດກັບບ້ານ ແລະ ເມືອງທ້ອງຖິ່ນ ເພື່ອສູ້ຊົນໃຫ້ບັນລຸໂຄງສ້າງໄລຍະຍາວໃຫ້ຍືນຍົງຫຼາຍຂຶ້ນສຳລັບທຶນດັ່ງກ່າວ ຊຶ່ງສົ່ງເສີມການຄຸ້ມຄອງດ້ວຍຕົນເອງຢ່າງມີຄວາມຮັບຜິດຊອບ. ພາຍຫຼັງໄລຍະການຄຸ້ມຄອງຂອງບໍລິສັດ, ບໍລິສັດ ພູເບ້ຍ ມາຍນິງໄດ້ມອບ-ຮັບຄວາມຮັບຜິດຊອບໃນການຄຸ້ມຄອງກອງທຶນດັ່ງກ່າວ ໃຫ້ບ້ານ ແລະ ເມືອງກ່ຽວຂ້ອງໃນປີ 2019. ກອງທຶນທີ່ຍັງເຫຼືອໃນບ້ານ ນ້ຳຍອນ ແລະ ນ້ຳໂມ້ແມ່ນສືບຕໍ່ຄຸ້ມຄອງໂດຍຄະນະກຳມະການຊີ້ນຳເມືອງ ອະນຸວົງປະຈຳເດືອນ ແລະ ມີການກວດສອບປະຈຳປີ. ກົນໄກການຄຸ້ມຄອງເຫຼົ່ານີ້ ຮັບປະກັນວ່າກອງທຶນການອອມ ແລະ ສິນເຊື່ອ ຍັງຄົງປະຕິບັດຕາມການກຳກັບດູແລ ແລະ ຂໍ້ກຳນົດໃນດ້ານການບໍລິຫານ. ໃນທ້າຍປີ 2019, ສະມາຊິກກອງທຶນການອອມ ແລະ ສິນເຊື່ອ ຢູ່ນ້ຳຍອນ ແລະ ນ້ຳໂມ້ ແລະ ນາໄຊສະຫວ່າງ ສືບຕໍ່ເພີ່ມຂຶ້ນເຖິງ 835 ຄົນ ແລະ 313 ຄົນຕາມລຳດັບ. ເພື່ອສະໜັບສະໜູນຈຸດປະສົງການປິດບໍ່ຂອງບໍລິສັດ, ກອງທຶນເຫຼົ່ານີ້ຈະຄ່ອຍໆພັດທະນາໃຫ້ກາຍເປັນສະຫະກອນການອອມ ແລະ ສິນເຊື່ອ ເຊິ່ງໄດ້ຈົດທະບຽນນຳທະນາຄານແຫ່ງສປປ ລາວ.

## ການຍົກຍ້າຍ, ການແກ້ໄຂຊີວິດການເປັນຢູ່, ການຊົດເຊີຍ ແລະ ການຄຸ້ມຄອງການຮ້ອງທຸກ

ບໍລິສັດ ພູເບ້ຍ ມາຍນິງ ໄດ້ວາງກົນໄກອອກເພື່ອຮັບ ແລະ ຕອບການຮ້ອງທຸກ ແລະ ຂໍ້ຂ້ອງໃຈຕ່າງໆຂອງຜູ້ມີສ່ວນໄດ້ສ່ວນເສຍ. ລະບຽບຂັ້ນຕອນການຄຸ້ມຄອງການຮ້ອງທຸກຂອງບໍລິສັດ ແກ້ໄຂບັນຫາທີ່ບານປາຍ ແລະ ຕັດສິນຊີ້ຂາດຖ້າຈຳເປັນ. ຂຶ້ນກັບຈັງວະເວລາ, ລັກສະນະ ແລະ ຄວາມຮ້າຍແຮງຂອງຂໍ້ຂ້ອງໃຈທີ່ຍົກຂຶ້ນມາສະເໜີ, ອາດຕ້ອງມີການສືບສວນສອບສວນເພີ່ມເຕີມ ຫຼື ສົ່ງຫາພາກສ່ວນເອກະລາດ.

ບໍ່ມີການຍົກຍ້າຍແບບບໍ່ສະໝັກໃຈໃນເຂດດຳເນີນງານຂອງບໍລິສັດ ຢູ່ລາວ.

ໃນປີ 2019 ບໍລິສັດໄດ້ຈ່າຍຄ່າຊົດເຊີຍຈຳນວນທັງໝົດ US$318,583 ສຳລັບຜົນກະທົບໃນຊີວິດການເປັນຢູ່ຈາກການສ້າງເສດຖະກິດທີ່ຕິດພັນກັບພືດທີ່ປູກໃນດິນ, , ຕົ້ນໄມ້ໃຫ້ໝາກ ແລະ ເນື້ອທີ່ດິນທີ່ຖືກກະທົບໃກ້ໂຄງການພູຄຳ, ໂດຍສະເພາະໃກ້ເສັ້ນທາງແກ່ແຮ່ຂອງໂຄງການ (HRA) ແລະ ສິ່ງທີ່ໄດ້ຮັບຜົນກະທົບຈາກການຂະຫຍາຍຂົງເຂດອ່າງເກັບຫາງແຮ່ (TSF)

## ການສະໜັບສະໜູນ ແລະ ການບໍລິຈາກ

ບໍລິສັດ ພູເບ້ຍ ມາຍນິງໄດ້ໃຫ້ການສະໜັບສະໜູນ ແລະ ບໍລິຈາກໃຫ້ໂຄງການ, ອົງການຈັດຕັ້ງ ແລະ ກິດຈະກຳ ເຊິ່ງສ້າງການແບ່ງປັນນ້ຳໃຈຢູ່ເຂດດຳເນີນງານ ແລະ ສອດຄ່ອງກັບຄຸນນະທຳຂອງບໍລິສັດ.

ໃນປີ 2019, ບໍລິສັດ ພູເບ້ຍ ມາຍນິງໄດ້ບໍລິຈາກເງິນສົດ ແລະ ວັດຖຸປັດໃຈໃຫ້ຜູ້ຮັບໃນຊຸມຊົນ ຈຳນວນ US$57,156.

## ການກະກຽມວາງແຜນເພື່ອປິດບໍ່

ການວາງແຜນປິດບໍ່ ແມ່ນສ່ວນສຳຄັນຕໍ່ຄວາມມຸ້ງໝັ້ນຂອງບໍລິສັດ ພູເບ້ຍ ມາຍນິງໃນການປະຕິບັດພັນທະຕ່າງໆທາງດ້ານອາຍຸຂອງບໍ່ແຮ່ຂອງບໍລິສັດໃຫ້ບັນລຸຜົນຢ່າງມີຄວາມຮັບຜິດຊອບ. ໃນຂະນະດຽວກັນ ຄາດຄະເນການປິດບໍ່ຊຸດຄົ້ນສຳລັບໂຄງການປັດຈຸບັນໃນລາວ ແມ່ນສາມປີ, ກຳລັງເຮັດວຽກຢ່າງຕໍ່ເນື່ອງເພື່ອຕໍ່ອາຍຸໃຫ້ເກີນໄລຍະດັ່ງກ່າວນີ້ ອີງຕາມການຍອມຮັບໃນເວທີສາກົນວ່າເປັນການປະຕິບັດທີ່ດີທີ່ມີປຶກສາຫາລືແຕ່ຫົວທີກັບຄູ່ຮ່ວມງານທີ່ໄດ້ຮັບຜົນກະທົບ ແລະ ໄດ້ເລີ່ມເຮັດໃຫ້ຄວາມມຸ້ງໝັ້ນທາງດ້ານການດຳເນີນງານສອດຄ່ອງກັບຜົນພາຍຫຼັງປິດບໍ່. ບໍລິສັດຮັບຮູ້ຄວາມຈຳເປັນທີ່ຕ້ອງຮັບປະກັນວ່າບັນດາຊຸມຊົນທີ່ຢູ່ໃກ້ກັບການດຳເນີນງານຂອງບໍລິສັດ ແມ່ນໄດ້ຮັບການສະໜັບສະໜູນເພື່ອສ້າງຂີດຄວາມສາມາດ ແລະ ທັກສະໃນການວາງແຜນ, ແລະ ຄຸ້ມຄອງວຽກງານພາຍຫຼັງປິດບໍ່ ແລະ ໃຊ້ປະໂຫຍດໃຫ້ເຕັມສ່ວນຈາກໂອກາດຕ່າງໆໃນການເຮັດທຸລະກິດໃດໜຶ່ງ.

ຊາວກະສິກອນທ້ອງຖິ່ນ ຈະຕ້ອງການຕະຫຼາດໃໝ່ ເພື່ອເຕີມເຕັມຄວາມຕ້ອງການທີ່ຫຼຸດລົງຊຶ່ງຈະເກີດຂຶ້ນພາຍຫຼັງປິດບໍ່. ຊາວກະສິກອນໂດຍລວມແລ້ວເຫັນດີວ່າການສຸມຄວາມພະຍາຍາມຂອງພວກເຂົາອີກຄັ້ງໃສ່ຜັກອິນຊີ, ໝາກກ້ຽງ ແລະ ໝາກນັດ ສາມາດສະໜອງຄວາມຕ້ອງການຂອງຕະຫຼາດໃນອະນາຄົດນີ້ໄດ້. ໃນປີ 2019, ບໍລິສັດ ໄດ້ອຳນວຍຄວາມສະດວກໃນການເຂົ້າເຖິງຕະຫຼາດ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ ຊຶ່ງສຸມໃສ່ຊະນິດ ແລະ ຄຸນນະພາບຂອງຜະລິດຕະພັນດັ່ງກ່າວນີ້, ຄຸ້ມຄອງການສະໜອງ ແລະ ຄວາມຕ້ອງການ, ແລະ ໃຊ້ປະໂຫຍດໃຫ້ເຕັມສ່ວນໃນການຂາຍ ແບບເປັນກຸ່ມ.

**ຕະຫຼອດປີ 2019, ບໍລິສັດ ພູເບ້ຍ ມາຍນິງ ສືບຕໍ່ມີສ່ວນຮ່ວມໃນການປຶກສາຫາລືກັບລັດຖະບານລາວ ແລະ ຊຸມຊົນເຈົ້າພາບ ກ່ຽວກັບຜົນກະທົບຂອງການປິດບໍ່, ການນຳໃຊ້ທີ່ດິນພາຍຫຼັງປິດບໍ່ ແລະ ບັນຫາອື່ນໆທີ່ຕິດພັນກັບການປິດບໍ່.**

## ການຄຸ້ມຄອງການຮ້ອງທຸກ

ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ໄດ້ວາງກົນໄກອອກເພື່ອຮັບ ແລະ ແກ້ໄຂການຮ້ອງທຸກ ແລະ ຂໍ້ຂ້ອງໃຈຂອງຄູ່ຮ່ວມງານ. ລະບຽບຂັ້ນຕອນການຄຸ້ມຄອງການຮ້ອງທຸກຂອງບໍລິສັດ ແກ້ໄຂບັນຫາທີ່ຮ້າຍແຮງຂຶ້ນ ແລະ ຕັດສິນຊີ້ຂາດຖ້າຈຳເປັນ. ຂຶ້ນກັບລັກສະນະ ແລະ ຄວາມຮ້າຍແຮງຂອງຂໍ້ຂ້ອງໃຈທີ່ຍົກຂຶ້ນມາ, ມັນອາດຈະຕ້ອງມີການສືບສວນເພີ້ມຕື່ມ ຫຼື ສົ່ງຕໍ່ໄປໃຫ້ພາກສ່ວນອິດສະຫຼະ.

ໃນປີ 2019, ໄດ້ຊຳລະຄ່າຊົດເຊີຍຈຳນວນ US$317,758 ສຳລັບພືດພັນ, ຕົ້ນໝາກໄມ້ ແລະ ທີ່ດິນ ທີ່ໄດ້ຮັບຜົນກະທົບຢູ່ໃກ້ໂຄງການ ພູຄຳ, ໂດຍສະເພາະ ຢູ່ຈຸດປະກົດແຮ່ຕາມເສັ້ນທາງແກ່ແຮ່ຂອງໂຄງການດັ່ງກ່າວ (HRA)  ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກການຂະຫຍາຍຂອບເຂດອ່າງເກັບຫາງແຮ່ (TSF).

# ກໍລະນີສຶກສາ

## ການລະດົມທຶນ US$100,000 ໃຫ້ຜູ້ປ່ວຍມະເຮັງເຕົ້ານົມໃນລາວ




ໃນເດືອນຕຸລາ, ບໍລິສັດ ພູເບ້ຍ ມາຍນິງ ແລະ ບໍລິສັດແມ່ ແພນອອສ໌ ໄດ້ດຳເນີນໂຄງການໂຄສະນາເຜີຍແຜ່ກ່ຽວກັບມະເຮັງເຕົ້ານົມຕະຫຼອດເດືອນ ເພື່ອຮວບຮວມເງິນຫຼາຍກວ່າ $100,000 ໃຫ້ຜູ້ປ່ວຍມະເຮັງເຕົ້ານົມທີ່ດ້ອຍໂອກາດໃນລາວ.

ແຜນງານປີ 2019 ແມ່ນເສີມຂະຫຍາຍຄວາມສຳເລັດຂອງໂຄງການ ປີ 2018 ຂອງບໍລິສັດໃນລາວຊຶ່ງວ່າ ໂດຍຜ່ານຂໍ້ມູນ ແລະ ການປະຊຸມປຶກສາຫາລື ສຳລັບພະນັກງານຂອງບໍລິສັດ ແລະ ຊຸມຊົນທ້ອງຖິ່ນ, ໄດ້ສະໜັບສະໜູນຄວາມສຳຄັນຂອງການກວດພົບແຕ່ເບື້ອງຕົ້ນ. ນັບແຕ່ກາງເດືອນຕຸລາ 2019, ຊຸກຍູ້ໃຫ້ພະນັກງານ ແລະ ຜູ້ຮັບເໝົາ ບໍລິຈາກສິ່ງທີ່ພວກເຂົາເຮັດໄດ້ໃຫ້ແກ່ໂຄງການດັ່ງກ່າວ. ໃນເວລາປິດຮັບການບໍລິຈາກ, ແພນອອສ໌ ໄດ້ສົມທົບເງິນບໍລິຈາກ ເທົ່າກັບຈຳນວນເງິນທີ່ລະດົມທຶນໄດ້ທັງໝົດ.

ພາຍຫຼັງສິ້ນສຸດແຜນງານດັ່ງກ່າວ, ບໍລິສັດ ພູເບ້ຍ ມາຍນິງ ໄດ້ເຊັນສັນຍາ ຊຶ່ງເຮັດໃຫ້ເງິນທີ່ຮວບຮວມໄດ້ເປັນທາງການ ຈະຖືກນຳໃຊ້ເພື່ອໃຫ້ຄວາມຊ່ວຍເຫຼືອດ້ານຄ່າປິ່ນປົວມະເຮັງເຕົ້ານົມສຳລັບຜູ້ປ່ວຍທີ່ດ້ອຍໂອກາດ ຢູ່ໂຮງໝໍເສດຖະທິລາດ. ຄ່າໃຊ້ຈ່າຍທາງການແພດທີ່ໄດ້ຮັບການອຸດໜູນລວມມີອຸລຕຣາຊາວ, ເອັກສ໌-ເຣ, ການກວດເຕົ້ານົມດ້ວຍເອັກສ໌-ເຣ (ແມມໂມແກຣມ), ການສາຍແສງ ແລະ ບຳບັດໂຣກດ້ວຍຄີໂມ, ການຜ່າຕັດ ແລະ ການໃຊ້ຢາພາຍຫຼັງປິ່ນປົວ. ເງິນບໍລິຈາກບາງສ່ວນ ກໍ່ຍັງຈະຖືກນຳໃຊ້ເພື່ອຮັບຜິດຊອບຄ່າໃຊ້ຈ່າຍບັງເອີນໃຫ້ຄົນເຈັບທີ່ເດີນທາງມາປິ່ນປົວຊຶ່ງອາໃສຢູ່ເຂດນອກນະຄອນຫຼວງວຽງຈັນ.

ຄວາມມຸ້ງໝັ້ນຂອງແຮງງານ ໃນການສະໜັບສະໜູນແຜນງານດັ່ງກ່າວແມ່ນສະແດງໃຫ້ເຫັນເຖິງຄວາມເຄົາລົບຂອງບໍລິສັດ ຕໍ່ລັດຖະບານ ແລະ ປະຊາຊົນລາວ ແລະ ຄວາມມຸ້ງໝັ້ນຂອງບໍລິສັດທີ່ຈະປະມໍລະດົກຕົກທອດທີ່ດີຢ່າງຍືນຍົງໄວ້ໃນປະເທດ ດ້ວຍການເພີ້ມການເຂົ້າເຖິງການປິ່ນປົວທີ່ມີຄຸນນະພາບ.

ຮູບດ້ານເທິງ: ສະມາຊິກຂອງທີມງານພະແນກສ້ອມແປງພາຫະນະເຄື່ອນທີ່ຂອງໂຄງການ ພູຄຳ ນຸ່ງເສື້ອສະທ້ອນແສງສີບົວ ເພື່ອເປັນກຽດໃຫ້ເດືອນແຫ່ງການໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບມະເຮັງເຕົ້ານົມ, ຢືນຢູ່ດ້ານໜ້າຂອງລົດແກ່ແຮ່ 777 ຊຶ່ງທາສີໃຫ້ເປັນສີບົວ ສຳລັບແຜນງານໃນປີ 2019. ສີບົວເປັນສີທີ່ມີມາແຕ່ເດີມຊຶ່ງເຊື່ອມໂຍງກັບການໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບມະເຮັງເຕົ້ານົມທົ່ວໂລກ.

# ການປະຕິບັດວຽກງານດ້ານສິ່ງແວດລ້ອມ

**ຄວາມເຄົາລົບຂອງບໍລິສັດ ພູເບ້ຍ ມາຍນິງ ຕໍ່ສິ່ງແວດລ້ອມສະແດງໃຫ້ເຫັນໂດຍຜ່ານການຄຸ້ມຄອງວຽກງານດ້ານສິ່ງແວດລ້ອມທີ່ດີເລີດ ຊຶ່ງສະທ້ອນເຖິງຄວາມຄາດຫວັງຂອງບັນດາຊຸມຊົນທີ່ອາໃສຢູ່ເຂດທີ່ພວກເຮົາເຂົ້າໄປດໍາເນີນງານ. ຍິ່ງໄປກວ່ານັ້ນ ການໂຄສະນາເຜີຍແຜ່ທາງດ້ານສິ່ງແວດລ້ອມ ແມ່ນຄຸນນະທໍາຫຼັກຂອງບໍລິສັດ ແລະ ນໍາໜ້າຍຸດທະສາດ, ການຕັດສິນໃຈ ແລະ ການດໍາເນີນງານແຕ່ລະມື້ຂອງບໍລິສັດ.**

ບໍລິສັດ ພະຍາຍາມຈໍາກັດຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ. ບໍລິສັດປະຕິບັດສິ່ງນີ້ດ້ວຍການປະຕິບັດຕາມຂໍ້ກໍານົດທາງດ້ານກົດໝາຍຂອງລາວ (ຢ່າງຕໍ່າ) ແລະ ມາດຕະຖານລະດັບສາກົນຖ້າມີ. ວິທີການດັ່ງກ່າວນີ້ ແມ່ນຮັບປະກັນການຄຸ້ມຄອງສິ່ງເສດເຫຼືອຈາກການຂຸດຄົ້ນຢ່າງມີປະສິດທິຜົນ, ການນໍາໃຊ້ຊັບພະຍາກອນຢ່າງມີປະສິດທິພາບ, ແລະ ການຟື້ນຟູເນື້ອທີ່ດິນຢ່າງຕໍ່ເນື່ອງ ດ້ວຍການຄວບຄຸມການປ່ອຍອາຍແກສຢູ່ເຂດບໍ່ຂຸດຄົ້ນທັງໝົດ ເພື່ອຮັບປະກັນວ່າບໍ່ມີຜົນກະທົບໄລຍະຍາວຕໍ່ແຫຼ່ງນໍ້າທໍາມະຊາດ ແລະ ບັນດາຊຸມຊົນທີ່ຢູ່ໃກ້ຄຽງ.

ບໍລິສັດ ພູເບ້ຍ ມາຍນິງ ຮັບຮູ້ວ່າການຄຸ້ມຄອງດ້ານສິ່ງແວດລ້ອມໂດຍການນໍາໃຊ້ບົດຮຽນທີ່ດີຂອງສາກົນ ແມ່ນສໍາຄັນສໍາລັບການເຕີບໂຕ ແລະ ຄວາມສໍາເລັດທາງທຸລະກິດແບບຍືນຍົງ. ບໍລິສັດສືບຕໍ່ຮັກສາມາດຕະຖານທາງສິ່ງແວດລ້ອມທີ່ກ່ຽວຂ້ອງທັງໝົດ ແລະ ດໍາເນີນງານສອດຄ່ອງກັບການປະຕິບັດທີ່ດີເລີດຂອງໂລກ ສ້າງລະບົບການຄຸ້ມຄອງທີ່ ຊຶ່ງໄດ້ຮັບການປັບປຸງໃຫ້ສອດຄ່ອງກັບການປະຕິບັດທີ່ດີເລີດທີ່ເປັນທີ່ຍອມຮັບ.

ການສຶກສາຂໍ້ມູນ, ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIAs), ການກວດສອບພາຍນອກ ແລະ ຄະນະຊ່ຽວຊານສາກົນ ສໍາລັບການຄຸ້ມຄອງຫາງແຮ່ ແມ່ນຖືກນໍາໃຊ້ຮ່ວມກັບຂັ້ນຕອນການຄຸ້ມຄອງຄວາມສ່ຽງພາຍໃນເພື່ອເຂົ້າໃຈປະຫວັດການຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມຂອງບໍລິສັດ ພູເບ້ຍ ມາຍນິງ.

ຄວາມສ່ຽງດ້ານສິ່ງແວດລ້ອມ ໄດ້ຮັບການຄຸ້ມຄອງຜ່ານລະບົບການຄຸ້ມຄອງທາງດ້ານສິ່ງແວດລ້ອມຂອງບໍລິສັດ ແພນອອສ໌ ຊຶ່ງສອດຄ່ອງກັບຫຼັກການ ISO14001 ໂລກ. ສໍາລັບບັນຫາສໍາຄັນ, ການກວດສອບພາຍນອກ ແລະ/ຫຼື ລາຍລະອຽດຂອງວຽກງານທີ່ໄດ້ຮັບການປະຕິບັດ (ຕົວຢ່າງ, ການຄຸ້ມຄອງຫາງແຮ່ ແລະ ຫີນເສດເຫຼືອ).

**ບໍລິສັດ ຮັບຮູ້ວ່າແຮງງານທີ່ເຂົ້າໃຈດ້ານສິ່ງແວດລ້ອມ ແມ່ນສ່ວນສໍາຄັນໃນການບັນລຸມາດຕະຖານສູງ ແລະ ມີການປັບປຸງຢ່າງຕໍ່ເນື່ອງ. ໃນແຕ່ລະປີ, ບໍລິສັດ ແພນອອສ໌ ໄດ້ຈັດໃຫ້ມີແຜນງານປູກຈິດສໍານຶກທາງດ້ານສິ່ງແວດລ້ອມຊຶ່ງລວມມີການແນະນໍາພະນັກງານ ແລະ ຜູ້ຮັບເໝົາໝົດທຸກຄົນທີ່ເຮັດວຽກຢູ່ໂຄງການຂອງບໍລິສັດໃນລາວ.**

ບໍລິສັດແມ່ ຂອງບໍລິສັດ ພູເບ້ຍ ມາຍນິງ, ແພນອອສ໌ ຊຸກຍູ້ການລາຍງານກ່ຽວກັບອຸປະຕິເຫດທາງດ້ານສິ່ງແວດລ້ອມທັງໝົດ ເນື່ອງຈາກມັນເສີມຂະຫຍາຍວັດທະນະທໍາການເຂົ້າໃຈຄວາມສ່ຽງ ແລະ ຮັບປະກັນວ່າ ທຸກບັນຫາ ລວມທັງບັນຫາເລັກນ້ອຍ ກໍ່ໄດ້ຮັບການສືບສວນ ແລະ ແກ້ໄຂຢ່າງຖືກຕ້ອງ. ອຸປະຕິເຫດທີ່ໄດ້ຮັບການບັນທຶກໄວ້ໃນການລາຍງານທາງເອເລັກໂຕນິກທົ່ວກຸ່ມບໍລິສັດ ແລະ ລະບົບການຄຸ້ມຄອງເຫດການທີ່ໄດ້ລົງມືປະຕິບັດໃຫ້ຖືກຕ້ອງ InControl (INX). ການນໍາໃຊ້  ເຮັດໃຫ້ສາມາດກໍານົດແນວທາງເພື່ອຊ່ວຍຫຼີກລ້ຽງການເກີດເຫດການຊໍ້າຊ້ອນຖ້າເປັນໄປໄດ້.

## ອຸປະຕິເຫດດ້ານສິ່ງແວດລ້ອມ

ໃນປີ 2019, ບໍລິສັດ ພູເບ້ຍ ມາຍນິງ ຈໍາກັດ ບໍ່ມີອຸປະຕິເຫດດ້ານສິ່ງແວດລ້ອມທີ່ຮ້າຍແຮງແຕ່ຢ່າງໃດ (ລະບຸໄວ້ໃນອຸປະຕິເຫດລະດັບ 3 ຫຼື ສູງກວ່າ*), ການຮ້ອງທຸກ, ການຮື້ອໄຖ, ການລົງໂທດ, ການປັບໄໝ ຫຼື ບົດລົງໂທດສໍາລັບການບໍ່ປະຕິບັດຕາມກົດໝາຍ.

## ການຄຸ້ມຄອງຫາງແຮ່ ແລະ ເສດຫີນ

ການຄຸ້ມຄອງຫາງແຮ່ ແລະ ເສດຫີນ ສືບຕໍ່ເປັນຄວາມສ່ຽງທາງດ້ານສິ່ງແວດລ້ອມໃນໄລຍະສັ້ນ ແລະ ໄລຍະຍາວ ທີ່ສໍາຄັນທີ່ສຸດ ສໍາລັບບໍລິສັດ ພູເບ້ຍ ມາຍນິງ. ປະລິມານຂອງຫາງແຮ່, ສ່ວນປະສົມແຮ່ທາດຂອງມັນ ແລະ ລັກສະນະຂອງຕະກອນທີ່ລະອຽດ, ແລະ ຄວາມຕ້ອງການອ່າງເກັບຫາງແຮ່ໃຫ້ມີຄວາມໝັ້ນຄົງໃນໄລຍະຍາວ ເປັນສິ່ງຈໍາເປັນຕໍ່ຍຸດທະສາດການຄຸ້ມຄອງຫາງແຮ່ທີ່ເຂັ້ມແຂງ.

ການຄຸ້ມຄອງເສດຫີນເພື່ອປ້ອງກັນຫີນທີ່ເປັນກົດ (ARD) ແມ່ນລະອຽດຮັດກຸມເນື່ອງຈາກຄວາມເປັນໄປໄດ້ສູງສໍາລັບ  ທີ່ຈະເຮັດໃຫ້ເກີດເປັນກົດ ແລະ ໂລຫະລະລາຍລົງໄປໃນນໍ້າ ຊຶ່ງອາດກໍ່ໃຫ້ເກີດອັນຕະລາຍຕໍ່ແຫຼ່ງນໍ້າທໍາມະຊາດ. ເພື່ອຄຸ້ມຄອງຄວາມສ່ຽງເຫຼົ່ານີ້ໃຫ້ມີປະສິດທິຜົນ, ຕ້ອງມີການວາງແຜນ ແລະ ການກໍານົດຢ່າງລະອຽດ ກ່ອນການພັດທະນາບໍ່ແຮ່. ການຄຸ້ມຄອງລະອຽດຮັດກຸມເພີ້ມເຕີມໃນໄລຍະດໍາເນີນງານ ແມ່ນເປັນສິ່ງສໍາຄັນເພື່ອຮັບປະກັນຜົນກະທົບທາງດ້ານສິ່ງແວດລ້ອມ ໃຫ້ເທົ່າກັບ, ຫຼື ດີກວ່າມາດຕະຖານສາກົນ. ການຄຸ້ມຄອງທາງດ້ານການດໍາເນີນງານ ກໍ່ຍັງສົ່ງເສີມການນໍາໃຊ້ທີ່ດິນຫຼັງການຂຸດຄົ້ນໃຫ້ເປັນປະໂຫຍດ ແລະ ຫຼຸດຜ່ອນໜີ້ສິນຫຼັງຈາກປິດບໍ່.

## ຫາງແຮ່

ບໍລິສັດ ພູເບ້ຍ ມາຍນິງ ຈັດຕັ້ງແຜນງານທີ່ໄດ້ຮັບການສ້າງຕັ້ງເປັນຢ່າງດີ ສໍາລັບອ່າງເກັບຫາງແຮ່ (TSF) ສອງອ່າງຕາມຈຸດປະສົງສະເພາະຢູ່ໂຄງການ ພູຄໍາ ແລະ ໂຄງການ ບ້ານຫ້ວຍຊາຍ. ແຕ່ລະອ່າງ ຖືກອອກແບບ ແລະ ກໍ່ສ້າງໄດ້ຕາມມາດຕະຖານສາກົນ ແລະ ຄໍາແນະນໍາຕ່າງໆ (ລວມມີຄະນະກໍາມະການແຫ່ງຊາດອົດສະຕຣາລີ ວ່າດ້ວຍອ່າງຂະໜາດໃຫຍ່, ANCOLD) ຊຶ່ງສະໜັບສະໜູນອາຍຸຂອງບໍ່ຂຸດຄົ້ນ ແລະ ຍຸດທະສາດການຄຸ້ມຄອງການປິດບໍ່ແບບປະສົມປະສານກັນ. ອ່າງເກັບຫາງແຮ່ຢູ່ໂຄງການ ພູຄໍາ ແມ່ນບັນຈຸເສດຫີນ ແລະ ຫາງແຮ່. ອ່າງເກັບຫາງແຮ່ຢູ່ໂຄງການ ບ້ານຫ້ວຍຊາຍ ຖືກນໍາໃຊ້ເພື່ອເກັບກັກຫາງແຮ່ ໂດຍທີ່ເສດຫີນຈະນໍາໄປໄວ້ຕ່າງຫາກໃນເຂດຖິ້ມເສດຫີນທີ່ຖືກກໍ່ສ້າງຕາມຫຼັກວິສະວະກໍາ.



ຮູບດ້ານເທິງ: ຜູ້ຊ່ວຍດ້ານສິ່ງແວດລ້ອມ, ນາງ ໄອ ກຳລັງປົວລະບັດກ້າເບ້ຍໄມ້ຢູ່ໃນສວນກ້າເບ້ຍໄມ້ຂອງໂຄງການ ພູຄຳ

ອ່າງເກັບຫາງແຮ່ ຕ້ອງມີການຄຸ້ມຄອງຢ່າງລະອຽດຮັດກຸມ ແລະ ຂັ້ນຕອນຕ່າງໆໃນການຄຸ້ມຄອງຕະຫຼອດອາຍຸຂອງແຕ່ລະອ່າງ. ບໍລິສັດ ພູເບ້ຍ ມາຍນິງ ມີແຜນງານເບິ່ງແຍງຮັກສາທີ່ໄດ້ຮັບການສ້າງຕັ້ງເປັນຢ່າງດີ ສໍາລັບອ່າງຫາງແຮ່ຂອງຕົນໃນລາວ ຊຶ່ງລວມມີຄືດັ່ງນີ້:

- ຄວາມມຸ່ງໝັ້ນໃນການຄຸ້ມຄອງໃນລະດັບຜູ້ບໍລິຫານຈາກປະທານຜູ້ບໍລິຫານ ເພື່ອຈັດຕັ້ງປະຕິບັດຂັ້ນຕອນການຄຸ້ມຄອງ ແລະ ການກໍ່ສ້າງ ແລະ ຂັ້ນຕອນດໍາເນີນງານທີ່ເໝາະສົມ ສໍາລັບອ່າງເກັບຫາງແຮ່ດັ່ງກ່າວ
- ຄະນະທົບທວນອ່າງຫາງແຮ່ແບບເອກະລາດ (TIRP), ປະກອບມີຊ່ຽວຊານທໍລະນີເຕັກນິກ ແລະ ຊ່ຽວຊານດ້ານນໍ້າ ຊຶ່ງປະຊຸມກັນທຸກໆປີ
- ການຮັບປະກັນສະພາບລວມ ແລະ ຄຸນນະພາບ, ເຊິ່ງທົບທວນໂດຍວິສະວະກອນອ່າງຫາງແຮ່ສະເພາະໃນດ້ານກິດຈະກໍາການອອກແບບ ແລະ ການກໍ່ສ້າງ
- ວິສະວະກອນເກັບກໍາຂໍ້ມູນ ເຊິ່ງຮັບຜິດຊອບໃນການອອກແບບ, ການກໍ່ສ້າງ, ການດໍາເນີນງານ, ແລະ ການຕິດຕາມການດໍາເນີນອ່າງຫາງແຮ່
- ການກວດກາຄວາມປອດໄພຂອງເຂື່ອນປະຈໍາປີ ໂດຍ ວິສະວະກອນເກັບກໍາຂໍ້ມູນ
- ການກວດກາປະຈໍາໄຕມາດໂດຍວິສະວະກອນອ່າງຫາງແຮ່ສະເພາະຂອງບໍລິສັດ
- ການກວດກາ ແລະ ການຕິດຕາມປະຈໍາວັນ, ອາທິດ ແລະ ເດືອນໂດຍພະນັກງານວິຊາການຂອງບໍລິສັດ
- ການອອກແບບເຂື່ອນຢ່າງລະອຽດສໍາລັບແຕ່ລະໄລຍະຂອງການກໍ່ສ້າງ ໂດຍນັກວິສະວະກອນດ້ານອອກແບບ
- ຫ້ອງທົດລອງປະຈໍາສະໜາມ ເພື່ອການຄວບຄຸມຄຸນນະພາບ ແລະ ການຮັບປະກັນໃນອຸປະກອນສໍາລັບການກໍ່ສ້າງ

ໃນປີຜ່ານມາ, ການທົບທວນຕາມແຜນການ ເຊິ່ງປະກອບມີການກວດກາປະຈໍາສະໜາມ ໄດ້ສືບຕໍ່ຢູ່ອ່າງເກັບຫາງແຮ່ຂອງໂຮງງານ ພູຄໍາ ແລະ ບ້ານ ຫ້ວຍຊາຍ. ໂດຍລວມແລ້ວ, ບໍ່ພົບຂໍ້ບົກຜ່ອງອັນສໍາຄັນ. ທັງສອງໂຮງງານປ່ອຍນໍ້າຈາກອ່າງເກັບຫາງແຮ່ຕາມຮູບແບບທີ່ມີການຄວບຄຸມ ອີງຕາມໃບອະນຸຍາດພາຍໃນ ແລະ ກົດລະບຽບຂອງລັດຖະບານ.

## ເສດຫີນ

ວິທີການຂອງບໍລິສັດ ພູເບ້ຍ ມາຍນິງ ໃນການຄຸ້ມຄອງ ຖືວ່າເປັນວິທີປະຕິບັດທີ່ປະສົບຜົນສໍາເລັດຫຼາຍທີ່ສຸດ ທົ່ວອຸດສາຫະກໍາບໍ່ແຮ່ໃນໂລກ. ວິທີການຂອງບໍລິສັດ ໄດ້ຖືກຂຽນບັນທຶກເປັນກໍລະນີສຶກສາຢູ່ໃນ 'ແຜນງານພັດທະນາແບບຍືນຍົງທີ່ມີການປະຕິບັດທີ່ປະສົບຜົນສໍາລັດຫຼາຍທີ່ສຸດຂອງລັດຖະບານອົດສະຕຣາລີ ສໍາລັບຄູ່ມືອຸດສາຫະກໍາບໍ່ແຮ່ວ່າດ້ວຍການປ້ອງກັນການລະບາຍນໍ້າເປື້ອນທີ່ມີຄຸນລັກສະນະເປັນກົດ ແລະ ໂລຫະ'.

ບໍລິສັດ ພູເບ້ຍ ມາຍນິງ ຕັ້ງໜ້າຄຸ້ມຄອງຄວາມເປັນໄປໄດ້ສໍາລັບ ນັບແຕ່ໄລຍະເບື້ອງຕົ້ນຂອງການວາງແຜນຂຸດຄົ້ນ ໄປຈົນເຖິງການດໍາເນີນງານ ແລະ ການປິດບໍ່. ໄດ້ກໍານົດແຜນການຄຸ້ມຄອງ ໄວ້ຢູ່ທັງໂຄງການ ພູຄໍາ ແລະ ໂຄງການ ບ້ານຫ້ວຍຊາຍ ເປັນຢ່າງດີ ກ່ອນເລີ້ມດໍາເນີນການຂຸດຄົ້ນ, ພ້ອມທັງໄດ້ສ້າງແບບຈໍາລອງທາດມາດ ຊຶ່ງເປັນສ່ວນປະກອບສໍາຄັນຂອງການສ້າງແບບຈໍາລອງຕົວສິນແຮ່ ແລະ ຂັ້ນຕອນຕ່າງໆໃນການວາງແຜນຂຸດຄົ້ນ. ແຜນດັ່ງກ່າວ ແມ່ນໃຫ້ຍຸດທະສາດສໍາລັບການລະບຸ, ຄວບຄຸມ ແລະ ຕິດຕາມເສດຫີນ ແລະ ປັບປຸງການປ່ຽນແປງທີ່ກ່ຽວຂ້ອງໃນການສ້າງແບບຈໍາລອງຊັລເຟີເປັນປະຈໍາ.

ການດຳເນີນການຂຸດຄົ້ນ ແມ່ນນຳໃຊ້ລະບົບຄຸ້ມຄອງຂະບວນພາຫະນະເຄື່ອນທີ່ (Jigsaw) ທີ່ລວມເອົາເຕັກໂນໂລຊີກຳນົດຕຳແໜ່ງເທິງໂລກຕາມເວລາຕົວຈິງ ເພື່ອຮັບປະກັນວ່າປະເພດເສດຫີນສະເພາະຖືກນຳໄປຈຸດປາຍທາງທີ່ຖືກຕ້ອງດ້ວຍລົດບັນທຸກແຕ່ລະຄັນ.

ການຄຸ້ມຄອງຂັ້ນສູງກ່ຽວກັບການຈັດການ  ສະໜອງໃຫ້ຜ່ານຄະນະກຳມະການທົບທວນການຄຸ້ມຄອງເສດຫີນ(WRM) ຂອງບໍລິສັດ ຊຶ່ງປະກອບມີພະນັກງານຄຸ້ມຄອງພາຍໃນ ແລະ ຊ່ຽວຊານພາຍນອກ. ຄະນະກຳມະການນີ້ ກວດສອບວ່າຍຸດທະສາດການຄຸ້ມຄອງໄດ້ຈຳກັດຄວາມເປັນໄປໄດ້ສຳລັບການສ້າງ  ໃນໄລຍະກໍ່ສ້າງ ແລະ ຈຸດທີ່ຈະເກັບມ້ຽນ ຫຼື ຖິ້ມເສດຫີນຢ່າງມີປະສິດທິຜົນ, ແລະ ກວດສອບວ່າຍຸດທະສາດດັ່ງກ່າວຈະສືບຕໍ່ມີປະສິດທິຜົນພາຍຫຼັງປິດບໍ່. ການທົບທວນຂອງທີ່ປຶກສາ ຢູ່ໂຄງການ ພູຄຳ ແລະ ໂຄງການ ບ້ານຫ້ວຍຊາຍ ຢັ້ງຢືນວ່າແຜນຄຸ້ມຄອງ  ເພື່ອຄວບຄຸມຄວາມສ່ຽງ ແມ່ນລະອຽດຮັດກຸມ ແລະ ສອດຄ່ອງກັບວິທີການຕ່າງໆທີ່ກຳນົດໄວ້ໃນຄູ່ມືແນະນຳກ່ຽວກັບຫີນທີ່ເປັນກົດໃນໂລກ..

ຄະນະກຳມະການທົບທວນ ມີການປະສານງານຢ່າງເຂັ້ມແຂງກັບຄະນະກຳມະການຄຸ້ມຄອງຂອງບໍລິສັດ ພູເບ້ຍ ມາຍນິງ, ຫຼື ເອີ້ນວ່າ  ແລະ ຄະນະທົບທວນເອກະລາດທາງດ້ານເຕັກນິກທໍລະນີສາດ.

## ການຄຸ້ມຄອງນ້ຳ

ບໍລິສັດ ພູເບ້ຍ ມາຍນິງ ຮັບຮູ້ວ່າຊັບພະຍາກອນນ້ຳ ຈຳເປັນຕ້ອງໄດ້ຮັບການຄຸ້ມຄອງຢ່າງມີຄວາມຮັບຜິດຊອບ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານການດຳເນີນງານ - ລວມທັງສຳລັບການປຸງແຕ່ງສິນແຮ່ - ໃນຂະນະດຽວກັນກໍ່ຈຳກັດຜົນກະທົບຕໍ່ແຫຼ່ງນ້ຳທຳມະຊາດ ແລະ ຊຸມຊົນ. ຢູ່ໂຄງການ ພູຄຳ ແລະ ໂຄງການ ບ້ານຫ້ວຍຊາຍ, ຄວາມທ້າທາຍຕ່າງໆຂອງການໄຫຼຂອງນ້ຳບໍ່ແຮ່ ແມ່ນເກີດມາຈາກສະຖານທີ່ຂອງເຂດຕ່າງໆ (ລັກສະນະພູມີປະເທດທີ່ມີພູສູງຊັນ ຢູ່ໃນສະພາບອາກາດຮ້ອນ ເຊິ່ງມີລະດູແລ້ງ ແລະ ລະດູຝົນ ທີ່ແຕກຕ່າງກັນຊັດເຈນ).

ບໍລິສັດ ພູເບ້ຍ ມາຍນິງ ປະເມີນ ແລະ ຄຸ້ມຄອງຄວາມສ່ຽງຂອງນ້ຳໂດຍຜ່ານຂັ້ນຕອນການຄຸ້ມຄອງຄວາມສ່ຽງພາຍໃນ. ແບບຈຳລອງຄວາມສົມດຸນຂອງນ້ຳ ໄດ້ຖືກວາງອອກຢູ່ທັງໂຄງການ ພູຄຳ ແລະ ໂຄງການ ບ້ານຫ້ວຍຊາຍ, ສະໜັບສະໜູນໂດຍແຜນງານຕິດຕາມ ແລະ ຄຸ້ມຄອງນ້ຳ. ແບບຈຳລອງດັ່ງກ່າວ ລວມເອົາການນຳໃຊ້ນ້ຳ ແລະ ການໄຫຼຂອງນ້ຳ, ແລະ ການຮັບເອົານ້ຳໜ້າດິນເຂົ້າໃນບໍ່ເປີດໜ້າດິນ ແລະ ອ່າງເກັບຫາງແຮ່ (TSF) ເພື່ອຄາດຄະເນປະລິມານການປ່ອຍນ້ຳອອກ. ນອກຈາກນັ້ນ ແບບຈຳລອງນີ້ ຍັງອະທິບາຍເຫດຜົນສຳລັບຫາງແຮ່ທີ່ມີຊັລເຟີສູງ ແລະ ເສດຫີນທີ່ຕ້ອງໃຫ້ຢູ່ກ້ອງພື້ນນ້ຳ ເພື່ອປ້ອງກັນຫີນທີ່ເປັນກົດ (ARD). ຢູ່ແຕ່ລະໂຄງການ, ນ້ຳສ່ວນໃຫຍ່ທີ່ໄຫຼເຂົ້າອ່າງເກັບຫາງແຮ່ແມ່ນການໄຫຼຂອງນ້ຳຝົນຈາກອ່າງຮັບນ້ຳເບື້ອງເທິງ, ເຊິ່ງມີປະລິມານຂອງນ້ຳທີ່ບຳບັດແລ້ວໜ້ອຍ ຊຶ່ງມາຈາກກິດຈະກຳຕ່າງໆຂອງການຜະລິດ-ປຸງແຕ່ງຢູ່ເຂດພາກສະໜາມ, ແລະ ຢູ່ໂຄງການ ພູຄຳ, ມາຈາກການແຍກນ້ຳອອກຈາກແຮ່ຫາດຢູ່ບໍ່ຂຸດຄົ້ນ. ປັດຈຸບັນ ແບບຈຳລອງເຫຼົ່ານີ້ ກຳລັງໄດ້ຮັບການປັບປຸງ ເພື່ອພິຈາລະນາທາງເລືອກຕ່າງໆໃນການພັດທະນາບໍ່ແຮ່ ແລະ ພິຈາລະນາການປິດບໍ່.

ການປ່ອຍນ້ຳອອກຈາກແຕ່ລະອ່າງເກັບຫາງແຮ່ ໄດ້ຮັບການຕິດຕາມກວດກາໂດຍພະນັກງານພະແນກສິ່ງແວດລ້ອມຂອງບໍລິສັດ, ແລະ ພະນັກງານຂອງລັດຖະບານລາວ. ໄດ້ປະເມີນຜົນໂດຍສົມທຽບກັບທະນາຄານໂລກ, ບໍລິສັດການເງິນສາກົນ ແລະ ຄຳແນະນຳຂອງລາວກ່ຽວກັບຄຸນນະພາບນ້ຳທົ່ວໄປ.

ບໍ່ເປີດໜ້າດິນ ແລະ ອ່າງເກັບຫາງແຮ່ ຢູ່ໂຄງການ ພູຄຳ ໄດ້ຖືກອອກແບບໂດຍມີການອ່ວຍສາຍນ້ຳສະອາດ ເພື່ອຫຼຸດຜ່ອນການດັກນ້ຳຝົນທີ່ໄຫຼເຊາະມາ. ການຄຸ້ມຄອງນ້ຳ ແນ່ໃສ່ເພື່ອອ່ວຍສາຍນ້ຳສະອາດທີ່ໄຫຼເຊາະມາໃຫ້ໄດ້ຫຼາຍເທົ່າທີ່ຈະເປັນໄປໄດ້ ແລະ ເພີ້ມການນຳກັບມາໃຊ້ຄືນໃໝ່ໃຫ້ສູງສຸດ ເພື່ອຈຳກັດການນຳໃຊ້ນ້ຳຈືດ ແລະ ປະລິມານການປ່ອຍນ້ຳ. ເນື່ອງຈາກປະລິມານນ້ຳຝົນປະຈຳປີ, ມີຄວາມສົມດຸນສຸດທິຂອງນ້ຳໃນດ້ານບວກ, ແລະ ນ້ຳລົ້ນໄດ້ຖືກປ່ອຍອອກຕາມຄວາມຈຳເປັນຢ່າງມີການຄວບຄຸມ ຕະຫຼອດປີ.

**ເນື່ອງຈາກການນຳໃຊ້ນ້ຳຂອງບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ແມ່ນມີຄວາມສຳຄັນຫຼາຍ, ເຊິ່ງປະລິມານສ່ວນຫຼາຍ ໄດ້ຖືກນຳກັບມາໃຊ້ຄືນໃໝ່. ປະມານ 95 ສ່ວນຮ້ອຍຂອງນ້ຳທີ່ນຳໃຊ້ຢູ່ໂຮງງານ ພູຄຳ ແມ່ນຖືກນຳກັບມາໃຊ້ຄືນໃໝ່, ໂດຍມີຄວາມຜິດດ່ຽງທີ່ໄດ້ມາຈາກນ້ຳຢູ່ນ້ຳໂມ້ ແລະ ສ່ວນຫຼາຍແມ່ນຖືກນຳໃຊ້ສຳລັບຈຸດປະສົງໃນພາຍໃນ ແລະ ລະບົບເຮັດໃຫ້ເຢັນສະເພາະ ສຳລັບເຄື່ອງຈັກຢູ່ໃນໂຮງງານຜະລິດ-ປຸງແຕ່ງ.**

ການກັບມາໃຊ້ນ້ຳຄືນໃໝ່ ແມ່ນມີຂີດຈຳກັດຢູ່ໂຮງງານ ບ້ານຫ້ວຍຊາຍ ເນື່ອງຈາກຂໍ້ຈຳກັດທາງດ້ານພູມີປະເທດ. ອັດຕາການໝູນນ້ຳມາໃຊ້ຄືນໃໝ່ໂດຍລວມໃນໂຮງງານພູຄຳ ແລະ ບ້ານ ຫ້ວຍຊາຍໃນປີ 2019 ແມ່ນ 86 ສ່ວນຮ້ອຍ.

## ການປ່ອຍນ້ຳຢູ່ໂຮງງານຜະລິດຄຳແບບກອງແຮ່ (GMO)

ໃນປີ 2019, ໄດ້ສືບຕໍ່ວຽກງານຕ່າງໆ ເພື່ອປັບປຸງແກ້ໄຂລານກອງແຮ່ ໃຫ້ບັນລຸການອອກແບບຮູບແບບທີ່ດິນໄລຍະສຸດທ້າຍອີງຕາມແຜນການປິດບໍ່ສຳລັບໂຮງງານຜະລິດຄຳແບບກອງແຮ່ (GMO).

ການກໍ່ສ້າງລະບົບດິນທາມຢູ່ສາຍນ້ຳຕອນລຸ່ມ ຂອງລານກອງແຮ່ຍັງຄົງມີໄວ້ເພື່ອບຳບັດນ້ຳຈາກພາຍຸຝົນແບບທຳມະຊາດທີ່ປ່ອຍອອກຈາກໂຮງງານ. ການຕິດຕາມລະບົບຂອງສາຍນ້ຳຕອນລຸ່ມ ແລະ ນ້ຳຊຶມຈາກລານກອງແຮ່ ສືບຕໍ່ສະແດງໃຫ້ເຫັນເຖິງຄຸນນະພາບນ້ຳ ທີ່ໄດ້ຕາມເກນມາດຕະຖານຂອງນ້ຳທີ່ຕ້ອງປ່ອຍອອກ ແລະ ນ້ຳທຳມະຊາດ.

## ການຄວບຄຸມການເຊາະເຈື່ອນ ແລະ ຕະກອນ

ການເກີນດຸນເປັນໄລຍະຂອງທາດແຂງແຂວນລອຍທັງໝົດ (TSS) ເກີດຂຶ້ນໃນໄລຍະລະດູຝົນປີ 2019 ຢູ່ໂຄງການພູຄຳ ຫຼັງຈາກເກີດມີປະລິມານນ້ຳຝົນສູງສຸດ. ບໍລິສັດ ພູເບ້ຍ ມາຍນິງ ສືບຕໍ່ຈັດຕັ້ງປະຕິບັດມາດຕະການຄວບຄຸມຕະກອນ ເພື່ອຫຼຸດຜ່ອນຜົນກະທົບຂອງຕະກອນໄຫຼອອກໄປເຂດນອກ.

ແຜນງານຕິດຕາມຊີວະນາໆພັນທາງນ້ຳປະຈຳປີ ບໍ່ໄດ້ລະບຸວ່າມີຜົນກະທົບຮ້າຍແຮງໃດໆໃນໄລຍະຍາວທີ່ເກີດຈາກເຂດຂອງໂຄງການ, ຊຶ່ງເນັ້ນໜັກວ່ານ້ຳໂມ້ ປະສົມກັບການໄຫຼຂອງຕະກອນໃນລະດັບທີ່ສູງອອກຈາກອ່າງໂຕ່ງໃນສາຍນ້ຳຕອນເທິງ.

ຢູ່ອ່າງເກັບຫາງແຮ່ຂອງໂຄງການບ້ານຫ້ວຍຊາຍ, ໄດ້ເກີດມີການເກີນດຸນເປັນໄລຍະຂອງທາດແຂງແຂວນລອຍ ຊຶ່ງຍັງສືບຕໍ່ໄດ້ຮັບການສຶກສາໂດຍຮ່ວມມືກັບລັດຖະບານລາວ.

## ການຄຸ້ມຄອງສານໄຊຍະນາຍ

ໂຄງການ ບ້ານຫ້ວຍຊາຍ ນຳໃຊ້ສານໄຊຍະນາຍເຂົ້າໃນການປຸງແຕ່ງທີ່ໃຊ້ວົງຈອນໄຟຟ້າເພື່ອສະກັດຄຳ ແລະ ເງິນອອກຈາກສິນແຮ່ທີ່ຂຸດຄົ້ນໄດ້. ບໍລິສັດ ພູເບ້ຍ ມາຍນິງ ຮັບຮູ້ວ່າການນຳໃຊ້ສານໄຊຍະນາຍສຳລັບການສະກັດໂລຫະທາດທີ່ມີຄ່າ ແມ່ນເປັນບັນຫາລະອຽດອ່ອນ ແລະ ຮັບຮູ້ວ່າການຄວບຄຸມທາງດ້ານການດຳເນີນງານ ແລະ ສິ່ງແວດລ້ອມທີ່ເຂັ້ມງວດ ແມ່ນຈຳເປັນເພື່ອຮັບປະກັນຄວາມປອດໄພຂອງການຂົນສົ່ງ, ການນຳໃຊ້ ແລະ ການກຳຈັດສານໄຊຍະນາຍ ແລະ ຜະລິດຕະພັນຕ່າງໆທີ່ຕິດພັນກັບສານໄຊຍະນາຍ.

ບໍລິສັດແມ່ ຂອງບໍລິສັດ ພູເບ້ຍ ມາຍນິງ, ແພນອອສ໌ ແມ່ນເປັນຜູ້ລົງນາມໃນຫຼັກການວ່າດ້ວຍສານໄຊຍະນາຍ ແລະ ຮັກສາການຢັ້ງຢືນການດຳເນີນງານຂອງໂຮງງານ ບ້ານຫ້ວຍຊາຍຕາມຫຼັກການດັ່ງກ່າວ. ຫຼັກການວ່າດ້ວຍສານໄຊຍະນາຍແມ່ນຄຸ້ມຄອງໂດຍສະຖາບັນຄຸ້ມຄອງສານໄຊຍະນາຍສາກົນ (ICMI) ແລະ ເປັນໂຄງການອາສາສະໝັກສຳລັບການຜະລິດ, ຂົນສົ່ງ, ນຳໃຊ້ ແລະ ກຳຈັດສານໄຊຍະນາຍທີ່ນຳໃຊ້ເຂົ້າໃນການຜະລິດຄຳ ຢ່າງມີຄວາມຮັບຜິດຊອບ.

ໂຮງງານ ບ້ານຫ້ວຍຊາຍ ໄດ້ຮັບການຢັ້ງຢືນດ້ານການດຳເນີນງານຕໍ່ຫຼັກການຄຸ້ມຄອງສານໄຊຍະນາຍສາກົນ ກ່ອນການດຳເນີນງານໃນປີ 2012, ໃບຢັ້ງຢືນສຳລັບການດຳເນີນງານໃນເດືອນມີນາ 2013, ແລະ ໄດ້ຮັບໃບຢັ້ງຢືນຄືນໃນປີ 2019. ບໍລິສັດ ພູເບ້ຍ ມາຍນິງຈັດຕັ້ງການກວດສອບຊ່ອງຫວ່າງພາຍໃນປະຈຳປີ ຢູ່ ໂຮງງານ ບ້ານຫ້ວຍຊາຍເພື່ອຮັບປະກັນວ່າ ໂຮງງານສືບຕໍ່ປະຕິບັດຕາມມາດຕະຖານດັ່ງກ່າວ. ບົດລາຍງານການກວດສອບ ແລະ ເອກະສານຢັ້ງຢືນຂອງແພນອອສ໌ ແມ່ນເຂົ້າເບິ່ງຢູ່ເວັບໄຊ ICMI, www.cyanidecode.org/signatory-company/panaust-limited.

ບໍລິສັດ ພູເບ້ຍ ມາຍນິງ ຮັບຮູ້ວ່າການຄຸ້ມຄອງຄວາມສ່ຽງຂອງສານໄຊຍະນາຍຢ່າງຕໍ່ເນື່ອງ ແມ່ນຂຶ້ນກັບແຮງງານທີ່ໄດ້ຮັບການຝຶກອົບຮົມ, ມີຄວາມສາມາດ, ເຂົ້າໃຈດີກ່ຽວກັບສານໄຊຍະນາຍ. ທີມງານກູ້ໄພສຸກເສີນປະຈຳພາກສະໜາມ ໄດ້ຮັບການຝຶກອົບຮົມ ເພື່ອຮັບມືກັບອຸປະຕິເຫດກ່ຽວກັບສານໄຊຍະນາຍ, ແລະ ໜອງເກັບສຸກເສີນ ມີຄວາມສາມາດໃນການດັກເກັບການຮົ່ວໄຫຼທີ່ເກີດຂຶ້ນໂດຍບັງເອີນ. ວຽກງານຂົນສົ່ງສານໄຊຍະນາຍ ໄດ້ປະຕິບັດໂດຍຜູ້ຂົນສົ່ງປະຈຳລາວ ທີ່ໄດ້ຮັບການຢັ້ງຢືນຫຼັກການວ່າດ້ວຍສານໄຊຍະນາຍ ແລະ ເຂດພາກສະໜາມ ເປັນຜູ້ຈັດປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບສານໄຊຍະນາຍ ກັບບັນດາຊຸມຊົນທີ່ຢູ່ຕາມເສັ້ນທາງຂົນສົ່ງພະນັກງານ ແລະ ເສັ້ນທາງແກ່ແຮ່ຂອງໂຄງການ ບ້ານຫ້ວຍຊາຍເປັນປະຈຳ.

## ການຟື້ນຟູເນື້ອທີ່ດິນ

ການຟື້ນຟູເນື້ອທີ່ດິນມີຄວາມຄືບໜ້າເທື່ອລະກ້າວ ແລະ ແຜນການປິດບໍ່ທີ່ເໝາະສົມ ແມ່ນຈຳເປັນເພື່ອຮັບປະກັນວ່າການນຳໃຊ້ທີ່ດິນຂັ້ນສຸດທ້າຍ ແມ່ນຕອບສະໜອງໄດ້ຕາມຄວາມຄາດຫວັງຂອງຜູ້ມີສ່ວນໄດ້ສ່ວນເສຍ ແລະ ຂໍ້ກຳນົດທາງດ້ານສິ່ງແວດລ້ອມ. ໂຄງການ ພູຄຳ ແລະ ໂຄງການ ບ້ານຫ້ວຍຊາຍ ຟື້ນຟູເນື້ອທີ່ດິນຢ່າງມີຄວາມຄືບໜ້າເທື່ອລະກ້າວ ເພື່ອຫຼຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມຢ່າງຕໍ່ເນື່ອງ ແລະ ອຳນວຍຄວາມສະດວກໃຫ້ການນຳໃຊ້ທີ່ດິນຫຼັງການຂຸດຄົ້ນ.

ທັງສອງໂຮງງານ ແມ່ນມີສວນເບ້ຍໄມ້ເພື່ອແຜ່ພັນເບ້ຍໄມ້ພື້ນບ້ານ ສຳລັບນຳໃຊ້ເຂົ້າໃນການຟື້ນຟູ. ແຜນງານປະຈຳປີ ໃນການຟື້ນຟູເນື້ອທີ່ດິນ ໄດ້ຖືກລວມເຂົ້າໃນແຜນດຳເນີນງານຂອງແຕ່ລະເຂດພາກສະໜາມ. ບໍລິສັດຮັບຮູ້ວ່າ ໃນກໍລະນີສ່ວນໃຫຍ່, ການຟື້ນຟູຈະບັນລຸຜົນສຳເລັດຢ່າງເຕັມສ່ວນ ອາດຕ້ອງໃຊ້ເວລາຫຼາຍປີ.

ໃນປີ 2019, ທີ່ດິນ 43 ເຮັກຕາ ໄດ້ຖືກລົບກວນທົ່ວທັງສອງໂຮງງານ ແລະ 55 ເຮັກຕາໄດ້ຮັບການຟື້ນຟູ.

## ການວາງແຜນປິດບໍ່

ບໍລິສັດ ພູເບ້ຍ ມາຍນິງ ພິຈາລະນາແຜນການປິດບໍ່ ຢູ່ໃນທຸກໄລຍະຂອງວົງຈອນອາຍຸຂອງໂຄງການ.

ມີຄະນະກຳມະການປິດບໍ່ຂອງລັດຖະບານລາວ. ຄະນະດັ່ງກ່າວໄດ້ຈັດຕັ້ງຜ່ານກອງປະຊຸມປຶກສາຫາລື ເພື່ອຮັບປະກັນວ່າ ກິດຈະກຳການປິດບໍ່ຂອງບໍລິສັດ ພູເບ້ຍ ມາຍນິງ ແມ່ນສອດຄ່ອງກັບຄວາມຄາດຫວັງຂອງຜູ້ມີສ່ວນກ່ຽວຂ້ອງ. ບົດບັນທຶກຄວາມເຂົ້າໃຈລະຫວ່າງບໍລິສັດ ແລະ ລັດຖະບານລາວກຳນົດລາຍລະອຽດຂອງຄະນະກຳມະການ ແລະ ຄວາມຄາດຫວັງຂອງສະມາຊິກຄະນະກຳມະການ.

ຄະນະກຳມະການຕໍ່ອາຍຸຂອງບໍ່ແຮ່ ແລະ ປິດບໍ່ຂອງແພນອອສ໌ ໄດ້ໃຫ້ການຕິດຕາມກວດສອບຂັ້ນຕອນການວາງແຜນປິດບໍ່ ແລະ ຍຸດທະສາດການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ. ຄະນະດັ່ງກ່າວ ໄດ້ຮັບການສະໜັບສະໜູນເພີ່ມເຕີມໂດຍທີ່ປຶກສາພາຍນອກຕາມຄວາມຕ້ອງການ.

## ການຄຸ້ມຄອງພະລັງງານ ແລະ ສານກາກບອນ

ນ້ຳມັນເຊື້ອໄຟ ແລະ ພະລັງງານໄຟຟ້າ ແມ່ນຕົວຂັບເຄື່ອນດ້ານຕົ້ນທຶນທີ່ສຳຄັນ ສຳລັບບໍລິສັດ ພູເບ້ຍ ມາຍນິງ. ປະສິດທິພາບຂອງພະລັງງານ ແມ່ນຖືວ່າຢູ່ໃນໄລຍະການອອກແບບ ສຳລັບການດຳເນີນງານ ແລະ ໂຄງການຕ່າງໆຂອງບໍລິສັດ ພູເບ້ຍ ມາຍນິງ. ແຜນການປຸກລະດົມອັນຕໍ່ເນື່ອງ ເພື່ອຫຼຸດຜ່ອນການນຳໃຊ້ພະລັງງານ ແລະ ວັດຖຸອຸປະກອນ ເພື່ອຫຼຸດຄ່າໃຊ້ຈ່າຍໃນການດຳເນີນງານ, ສອດຄ່ອງກັບເຈດຈຳນົງຂອງສະພາສາກົນວ່າດ້ວຍຫຼັກການດ້ານບໍ່ແຮ່ ແລະ ໂລຫະທາດ (ICMM) ສຳລັບການກຳນົດການປ່ຽນແປງຂອງສະພາບອາກາດ.

ແພນອອສ໌, ບໍລິສັດແມ່ ຂອງບໍລິສັດ ພູເບ້ຍ ມາຍນິງ ປະເມີນ ແລະ ຄຸ້ມຄອງຄວາມສ່ຽງຂອງສານກາກບອນ ແລະ ການປ່ຽນແປງຂອງສະພາບອາກາດ ຜ່ານຂັ້ນຕອນຄຸ້ມຄອງພາຍໃນ ແລະ ລະບົບຕ່າງໆ ເພື່ອຄຸ້ມຄອງຄວາມສ່ຽງ ທີ່ຕິດພັນກັບສະພາບອາກາດຮ້າຍແຮງ ຢູ່ເຂດດຳເນີນງານ ແລະ ເຂດໂຄງການຂອງບໍລິສັດ.

ບໍລິສັດ ໄດ້ອອກນຳໃຊ້ຄວາມຢືດຢຸ່ນໃນຕ່ອງໂສ້ການຂົນສົ່ງຂອງຕົນກ່ຽວກັບເສັ້ນທາງແກ່ແຮ່ ແລະ ການເຂົ້າໄປຫາທ່າເຮືອ. ນອກຈາກນັ້ນ, ບໍລິສັດ ພູເບ້ຍ ມາຍນິງ ຍັງມີແຜນສຸກເສີນໄວ້ສຳລັບວັດຖຸອຸປະກອນສຳຄັນໃນຕ່ອງໂສ້ການສະໜອງສິນຄ້າທົ່ວໄປ ແລະ ຮັກສາລະດັບການສຳຮອງສຸກເສີນຢ່າງເໝາະສົມ.

ເຂດດຳເນີນງານຂອງບໍລິສັດ ພູເບ້ຍ ມາຍນິງ ພັດທະນາສາງເກັບກັກການປ່ອຍພະລັງງານ ແລະ ສານກາກບອນປະຈຳປີ. ການດຳເນີນງານຂອງບໍລິສັດນຳໃຊ້ແຫຼ່ງພະລັງງານແບບປະສົມປະສານທາງກົງ ແລະ ທາງອ້ອມເປັນສ່ວນໃຫຍ່ (ນ້ຳມັນເຊື້ອໄຟ ແລະ ພະລັງງານໄຟຟ້າ), ເພື່ອຈັດຕັ້ງປະຕິບັດກິດຈະກຳຂອງຕົນ. ແຕ່ລະປີ, ທີມງານທົ່ວຂະແໜງທຸລະກິດຂອງບໍລິສັດຈະກຳນົດ ແລະ ຈັດຕັ້ງປະຕິບັດໂຄງການ ເຊິ່ງຈະຫຼຸດຜ່ອນການຊົມໃຊ້ພະລັງງານ ແລະ/ຫຼື ອຸປະກອນສິ້ນເປືອງ. ແຜນການປຸກລະດົມອັນຕໍ່ເນື່ອງແມ່ນມີໄວ້ ເພື່ອຫຼຸດການຊົມໃຊ້ພະລັງງານ ແລະ/ຫຼື ອຸປະກອນສິ້ນເປືອງ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ, ແລະ ປະຕິບັດສອດຄ່ອງກັບຫຼັກການຂອງອົງການ ICMM ສຳລັບການອອກແບບຕາມການປ່ຽນແປງສະພາບອາກາດ.

ໃນຖານະທີ່ເປັນຜູ້ຊົມໃຊ້ພະລັງງານໃນປະລິມານຫຼາຍ, ບໍລິສັດ ພູເບ້ຍ ມາຍນິງ ກຳນົດແຜນງານນຳໃຊ້ຢ່າງມີປະສິດທິພາບປະຈຳປີ ເພື່ອຫຼຸດຜ່ອນຄວາມຕ້ອງການທາງດ້ານພະລັງງານ. ໃນແຕ່ລະປີ, ທີມງານທົ່ວບໍລິສັດ ກຳນົດ ແລະ ຈັດຕັ້ງປະຕິບັດໂຄງການຕ່າງໆ ເພື່ອຫຼຸດຜ່ອນການຊົມໃຊ້ພະລັງງານ ແລະ/ຫຼື ວັດຖຸອຸປະກອນຕ່າງໆ. ໂຄງການເຫຼົ່ານີ້ ໄດ້ຮັບການຕິດຕາມ ເພື່ອລະບຸການປະຢັດພະລັງງານປະຈຳປີ, ຊຶ່ງລວມມີການປ່ອຍອາຍແກສ໌ໃນເຮືອນແກ້ວ, ແລະ ໄລຍະເກັບກູ້ທຶນຄືນ.

# ກໍລະນີສຶກສາ

## ບໍລິສັດ ພູເບ້ຍ ມາຍນິ້ງ ສະໜັບສະໜູນຕົວແທນຈາກລັດຖະບານລາວ ເພື່ອເຂົ້າຮ່ວມກອງປະຊຸມວ່າດ້ວຍການປິດບໍ່ ແລະ ທັດສະນະສຶກສາຢູ່ອົດສະຕຣາລີ



ໃນເດືອນກັນຍາ, ບໍລິສັດ ພູເບ້ຍ ມາຍນິ້ງ (PBM) ຮັບຮອງຕົວແທນຈາກລັດຖະບານລາວ ເຂົ້າຮ່ວມກອງປະຊຸມສາກົນປະຈຳປີຄັ້ງທີ 13 ວ່າດ້ວຍການປິດບໍ່ ຢູ່ເມືອງ ເພີດ, ເວສເທີນ ອົດສະຕຣາລີ.

ໃນລະຫວ່າງກອງປະຊຸມ, ຕົວແທນຈາກລັດຖະບານ ໄດ້ພົບປະກັບກະຊວງຄຸ້ມຄອງດ້ານລະບຽບການ ແລະ ຄວາມປອດໄພຂອງອຸດສາຫະກຳບໍ່ແຮ່ປະຈຳເວສເທີນ ອົດສະຕຣາລີ (DMIRS). ໃນຖານະທີ່ເປັນໜ່ວຍງານດ້ານກົດລະບຽບການປິດບໍ່ສາກົນ,  ໄດ້ໃຫ້ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບການປິດບໍ່, ການຄຸ້ມຄອງ ແລະ ໂຄງຮ່າງການອະນຸມັດ, ການວາງແຜນ ແລະ ການອະນຸຍາດ, ຄວາມທ້າທາຍຂອງການປິດບໍ່ ແລະ ວິທີການແກ້ໄຂການປິດບໍ່ທີ່ເປັນທີ່ຍອມຮັບ.

ຫຼັງຈາກສິ້ນສຸດກອງປະຊຸມ, ຕົວແທນຈາກບໍລິສັດ ພູເບ້ຍ ມາຍນິ້ງ ແລະ ລັດຖະບານ ໄດ້ຮ່ວມທັດສະນະສຶກສາເປັນເວລາ 2 ມື້ ໃນເມືອງໂຄລລີ ມາຍ ເລກ ຢູ່ໂຄລລີ (Collie), ຊຶ່ງເປັນເມືອງທີ່ຕັ້ງຢູ່ທາງທິດຕາເວັນອອກສ່ຽງໃຕ້ຂອງເມືອງເພີດ. ໂຄລລີ ເປັນເມືອງບໍ່ແຮ່ຂອງອົດສະຕຣາລີຊຶ່ງສະແດງໃຫ້ເຫັນເຖິງຕົວຢ່າງຂອງການປິດບໍ່ ແລະທາງເລືອກຕ່າງໆໃນການນຳໃຊ້ທີ່ດິນພາຍຫຼັງປິດບໍ່.

ການທັດສະນະສຶກສາໃນຄັ້ງນີ້ ໄດ້ເປີດໂອກາດໃຫ້ຕົວແທນຈາກລັດຖະບານລາວເຂົ້າຊົມເຂດທີ່ໄດ້ຮັບການປິດບໍ່ ແລະ ຊົມຕົວຢ່າງຂອງຮູບແບບທີ່ດິນພາຍຫຼັງການປິດບໍ່.

ການທັດສະນະສຶກສາ ຢູ່ໃນເວສເທີນ ອົດສະຕຣາລີ ຊ່ວຍໃຫ້ບໍລິສັດ ພູເບ້ຍ ມາຍນິ້ງ ສາມາດສະແດງໃຫ້ເຫັນເຖິງວິໄສທັດການປິດບໍ່ຂອງບໍລິສັດຜ່ານຕົວຢ່າງຈາກຕົວຈິງ. ຍິ່ງໄປກວ່ານັ້ນ, ການທັດສະນະສຶກສາດັ່ງກ່າວຍັງເພີ້ມຄວາມເຂົ້າໃຈຂອງລັດຖະບານກ່ຽວກັບການດຳເນີນງານດ້ານການຂຸດຄົ້ນ, ການວາງແຜນຂຸດຄົ້ນ ແລະ ວຽກງານການປິດບໍ່ທີ່ຍືນຍົງແບບປະສົມປະສານ.

ຮູບດ້ານເທິງ: ຕົວແທນຈາກບໍລິສັດ ພູເບ້ຍ ມາຍນິ້ງ ແລະ ຕົວແທນຈາກລັດຖະບານລາວ ຢູ່ກັບເຈົ້າພາບຕ້ອນຮັບ, ນັກວິທະຍາສາດດ້ານສິ່ງແວດລ້ອມ ແລະ ຜູ້ອຳນວຍການທີ່ປຶກສາ ມາຍເລກ, ດຣ ເຊີຣີ ແມັກຄູໂລ ແລະ ອິງກອນ ໂກລເດີ, ດຣ ເດວິນ ຄາສ໌ເທັນດິກ ໃນໄລຍະການທັດສະນະສຶກສາເມືອງເລກ ມາຍ ໂຄລລີ, ເວສເທີນ ອົດສະຕຣາລີ

# ການປະຕິບັດວຽກງານ ດ້ານສຸຂະພາບ ແລະ ຄວາມປອດໄພ

## ການປະຕິບັດວຽກງານດ້ານຄວາມປອດໄພ

ຢູ່ບໍລິສັດ ພູເບ້ຍ ມາຍນິງ, ຄວາມປອດໄພ ແມ່ນສຳຄັນທີ່ສຸດ, ຄວາມມຸ້ງໝັ້ນຂອງບໍລິສັດຕໍ່ຄວາມປອດໄພ ຊຶ່ງຫຼັກການປາດສະຈາກການບາດເຈັບເປັນສ່ວນສຳຄັນໃນຜົນສຳເລັດ ເຊິ່ງອຸປະຕິເຫດທັງໝົດ ຖືວ່າສາມາດປ້ອງກັນໄດ້.

ຈຸດສຸມຂອງມາດຕະການດ້ານຄວາມປອດໄພໃນປີ 2019 ແມ່ນການປັບປຸງລະບົບປະຈຸບັນ, ແທນການນຳສະເໜີແຜນງານໃໝ່. ພະນັກງານຕ່າງປະເທດປະຈຸບັນແມ່ນໃຫ້ການແນະນຳ ແລະ ຝຶກອົບຮົມລົງປະຕິບັດໃນໜ້າວຽກຕົວຈິງເພີ່ມຂຶ້ນໃຫ້ພະນັກງານຄົນລາວ. ແຜນງານຕົວຊີ້ວັດຜົນທີ່ສາເຫດສືບຕໍ່ສຸມໃສ່ການນຳພາດ້ານຄວາມປອດໄພທີ່ເບິ່ງເຫັນ, ການສັງເກດດ້ານຄວາມປອດໄພໃນວຽກງານຢູ່ພາກສະໜາມ (JSO), ການກວດສອບແບບລະອຽດ, ການກວດກາສະຖານທີ່ປະຕິບັດວຽກ, ການລະບຸຄວາມອັນຕະລາຍ ແລະ ການຝຶກອົບຮົມດ້ານຄວາມປອດໄພ, ແລະ ການສັງເກດໜ້າວຽກຕາມແຜນການ (PTO)

ໃນປີ 2019, ອັດຕາຄວາມຖີ່ການບາດເຈັບທີ່ບັນທຶກໄດ້ທັງໝົດ(TRIFR) ແມ່ນ 0.43 ຕໍ່ລ້ານຊົ່ວໂມງການເຮັດວຽກ, ປັບປຸງດີຂຶ້ນ 30 ສ່ວນຮ້ອຍ ໃນຫົວໜ່ວຍວັດແທກດ້ານຄວາມປອດໄພປີ 2018. ບັນລຸອັດຕາຄວາມຖີ່ການບາດເຈັບທີ່ຕ້ອງໄດ້ພັກວຽກ (LTIFR) ແມ່ນ 0.21 ຕໍ່ລ້ານຊົ່ວໂມງເຮັດວຽກໃນປີ 2019. ການປັບປຸງດີຂຶ້ນປີຕໍ່ປີ ຂອງຫົວໜ່ວຍວັດແທກດ້ານຄວາມປອດໄພຂອງພວກເຮົາ ສະແດງໃຫ້ເຫັນເຖິງການເຕີບໂຕຂອງຂະບວນການ ແລະ ລະບົບຄວາມປອດໄພທີ່ໄດ້ວາງອອກຢູ່ໂຄງການຂອງພວກເຮົາ.

## ວັດທະນະທຳດ້ານຄວາມປອດໄພ

ບໍລິສັດ ພູເບ້ຍ ມາຍນິງ ສືບຕໍ່ພັດທະນາວັດທະນະທຳດ້ານຄວາມປອດໄພແບບລົງມືປະຕິບັດ ແລະ ສ້າງສັນ ເພື່ອສະແດງອອກເຖິງຄຸນນະທຳຂອງບໍລິສັດກ່ຽວກັບຄວາມຊື່ສັດ ແລະ ຄວາມມຸ່ງໝັ້ນຕາມຈຸດປະສົງປະຕິບັດຄວາມປອດໄພໂດຍປາດສະຈາກການບາດເຈັບ. ວັດທະນະທຳດ້ານຄວາມປອດໄພຂອງບໍລິສັດແມ່ນວັດແທກຜ່ານຫຼາຍໆຕົວຊີ້ວັດຜົນທີ່ສາເຫດ ແລະ ຕົວຊີ້ວັດຜົນທີ່ເກີດຂຶ້ນແລ້ວຈາກການປະຕິບັດງານ. ບໍລິສັດນຳໃຊ້ໂຄງການຝຶກອົບຮົມ (ມີການນຳພາຕາມແນວທາງຂອງແພນອອສ໌), ເຊິ່ງສະໜັບສະໜູນໂດຍໂຄງການຄວາມເປັນຜູ້ນຳດ້ານຄວາມປອດໄພອັນຊັດເຈນ (ນຳພາໂດຍຄະນະບໍລິຫານ ຜ່ານການທົບທວນແບບລະອຽດໃນກິດຈະກຳທີ່ມີຄວາມສ່ຽງສູງ), ຕົວຊີ້ວັດການປະຕິບັດງານແບບສ້າງສັນ (PPI) - ລວມມີ JSO ແລະ PTO - ແລະ ກອງປະຊຸມຄວາມສ່ຽງ ແລະ ຄວາມຍືນຍົງປະຈຳປີ.

ໃນປີ 2019, ບໍລິສັດ ສືບຕໍ່ຈັດຕັ້ງປະຕິບັດໂຄງການປາດສະຈາກການບາດເຈັບ ແລະ ອຸປະຕິເຫດ (IIF) ໃນສອງໄລຍະ ເພື່ອຮັບປະກັນວ່າ ພະນັກງານສືບຕໍ່ຮັກສາວັດທະນະທຳດ້ານຄວາມປອດໄພ ໃຫ້ເປັນຄຸນນະທຳຫຼັກ, ເພື່ອປັບປຸງພຶດຕິກຳໃນສະຖານທີ່ເຮັດວຽກ ແລະ ສະໜອງວັດທະນະທຳດ້ານຄວາມປອດໄພແບບມີການຊ່ວຍເຫຼືອ. ໂຄງການປະກອບມີອົງປະກອບຫຼັກຫ້າຢ່າງ: ການສື່ສານແບບມີປະສິດທິພາບ, ຄວາມເປັນຜູ້ນຳທີ່ຊັດເຈນ, ຄວາມພ້ອມໃນການເຮັດວຽກ, ການລະບຸພຶດຕິກຳດ້ານຄວາມປອດໄພ ແລະ ການລະບຸອັນຕະລາຍ.

## ການຄຸ້ມຄອງຜູ້ຮັບເໝົາ

ບໍລິສັດ ພູເບ້ຍ ມາຍນິງ ມຸ່ງໝັ້ນປັບປຸງການປະຕິບັດງານດ້ານຄວາມປອດໄພປີຕໍ່ປີ. ບໍລິສັດ ພິຈາລະນາຄວາມປອດໄພຂອງຜູ້ຮັບເໝົາເຊິ່ງເປັນສ່ວນສຳຄັນໃນການປະຕິບັດວຽກງານດ້ານຄວາມປອດໄພໂດຍລວມຂອງບໍລິສັດ ແລະ ເຫັນວ່າຄວາມສຳພັນຂອງບໍລິສັດ ແມ່ນການຮ່ວມມືທີ່ສຳຄັນທີ່ສຸດ.

ອີງຕາມຫຼັກການດັ່ງກ່າວນີ້, ຜູ້ຮັບເໝົາລວມເຂົ້າໃນແຜນງານເອົາໃຈໃສ່ດ້ານຄວາມປອດໄພໃນການດຳເນີນງານ, ແລະ ມີການຈັດກອງປະຊຸມຜູ້ຮັບເໝົາປະຈຳໄຕມາດໃນປີ 2019. ຕົວແທນຈາກຜູ້ຮັບເໝົາຫຼັກໄດ້ເຂົ້າຮ່ວມກອງປະຊຸມສຸດຍອດວ່າດ້ວຍຄວາມປອດໄພຂອງບໍລິສັດ ເພື່ອເພີ່ມທະວີຄວາມຄາດຫວັງຂອງບໍລິສັດກ່ຽວກັບຄວາມປອດໄພ.

ບໍລິສັດມີມາດຕະຖານການຄຸ້ມຄອງຜູ້ຮັບເໝົາ ທີ່ລະບຸລະອຽດເງື່ອນໄຂຂອງກຸ່ມບໍລິສັດ ເຊິ່ງມີລາຍລະອຽດມາດຖານດ້ານສຸຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມສຳລັບຜູ້ຮັບເໝົາ ແລະ ເຈົ້າຂອງໂຄງການ. ໃນປີ 2019, ຄວາມຄາດຫວັງຂອງມາດຕະຖານດັ່ງກ່າວ ແມ່ນໄດ້ປະກອບເຂົ້າໃນການຝຶກອົບຮົມສຳລັບເຈົ້າຂອງໂຄງການ ແລະ ຮອງພະແນກກ່ຽວກັບວິທີຈັດຕັ້ງປະຕິບັດມາດຕະຖານດັ່ງກ່າວ.

## ການຂົນສົ່ງ, ພາຫະນະ ແລະ ເຄື່ອງຈັກເຄື່ອນທີ່

ຄວາມປອດໄພດ້ານພາຫະນະໃນທັງສອງໂຮງງານ, ແລະ ຕາມເສັ້ນທາງຄົມມະນາຄົມ ແລະ ຂົນສົ່ງແຮ່ຍັງຄົງເປັນຂົງເຂດຈຸດສຸມສຳລັບການດຳເນີນທຸລະກິດ ເນື່ອງຈາກການເກີດຄວາມສ່ຽງຕາມທຳມະຊາດທີ່ມາກັບການດຳເນີນງານ ແລະ ການຂັບເຄື່ອນລົດຂົນສົ່ງໃນເສັ້ນທາງຫຼວງ.

ຄວາມເອົາໃຈໃສ່ອັນຕໍ່ເນື່ອງໃນຂົງເຂດນີ້, ໂດຍມີເປົ້າໝາຍເພື່ອສືບຕໍ່ການປັບປຸງ, ໄດ້ເຮັດໃຫ້ອຸປະຕິເຫດຂອງພາຫະນະຕ່າງໆຫຼຸດລົງໄດ້ຫຼາຍ ຈາກ 101 ກໍລະນີ ໃນປີ 2013, ຫຼຸດລົງ 14 ກໍລະນີ ໃນປີ 2019.

ໃນບໍລິສັດ ພູເບ້ຍ ມາຍນິງ, ລະບຽບຂັ້ນຕອນການຄຸ້ມຄອງຄວາມອິດເມື່ອຍ ແມ່ນມີໄວ້ປະຈຳ ແລະ ໄດ້ສຸ່ມກວດຫາສານເຫຼົ້າ ແລະ ສານເສບຕິດ. ໃນໄລຍະປີ 2019, ແຜນລິເລີ່ມຂອງບໍລິສັດເພື່ອຄຸ້ມຄອງຄວາມອິດເມື່ອຍໄດ້ຈັດຕັ້ງປະຕິບັດມີຄື: ການຮັດແໜ້ນຍຸດທະສາດດ້ານຄວາມອິດເມື່ອຍເຂົ້າໃນທຸລະກິດຂອງບໍລິສັດ ພູເບ້ຍ ມາຍນິງ, ການເປີດນຳໃຊ້ລະບົບຄວາມປອດໄພຂອງຄົນຂັບລົດຄາເທີພິລາ (DSS) ໃນລົດຂຸດຄົ້ນ 777D ທັງໝົດຢູ່ທັງສອງໂຄງການ ແລະ ວັນແຫ່ງຄວາມປອດໄພຂອງພະແນກຂົນສົ່ງ ເພື່ອໃຫ້ຄວາມຮູ້ແກ່ສະມາຊິກຄອບຄົວກ່ຽວກັບວ່າພວກເຂົາສາມາດສະໜັບສະໜູນຄົນຂັບລົດໃນການຄຸ້ມຄອງຄວາມອິດເມື່ອຍຂອງບຸກຄົນ.

## ການຝຶກອົບຮົມດ້ານຄວາມປອດໄພ

ບໍລິສັດໄດ້ຈັດຕັ້ງແຜນງານຝຶກອົບຮົມດ້ານຄວາມປອດໄພຫຼັກທີ່ຕ້ອງປະຕິບັດຕາມຫຼາຍຊຸດ ເຊັ່ນດຽວກັບການຝຶກອົບຮົມຂອງຜູ້ຊ່ຽວຊານສຳລັບວຽກງານທີ່ມີຄວາມສ່ຽງສູງ. ໃນປີ 2018, ການແນະນຳ ແລະ ການຝຶກອົບຮົມດ້ານສຸຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມສຳເລັດໄດ້ 24,423 ຊົ່ວໂມງ.

# ກໍລະນີສຶກສາ

## ລະບົບຄວາມປອດໄພຂອງຄົນຂັບລົດ Caterpillar ຫຼຸດຜ່ອນອຸປະຕິເຫດທີ່ຕິດພັນກັບຄວາມອິດເມື່ອຍ




ໃນປີ 2019, ໃນການສະແດງໃຫ້ເຫັນເຖິງຄວາມມຸ້ງໝັ້ນຂອງບໍລິສັດ ພູເບ້ຍ ມາຍນິງ ທີ່ຈະຫຼຸດຜ່ອນອຸປະຕິເຫັດດ້ານຄວາມປອດໄພທີ່ຕິດພັນກັບຄົນຂັບລົດ ແລະ ຄວາມອິດເມື່ອຍ ຢູ່ໂຄງການຂອງບໍລິສັດ, ບໍລິສັດ ພູເບ້ຍ ມາຍນິງ ໄດ້ອະນຸມັດການຈັດຊື້ ແລະ ຈັດຕັ້ງປະຕິບັດລະບົບຄວາມປອດໄພຂອງຄົນຂັບລົດຄາເທີພິລາ (DSS) ຢູ່ໃນຂະບວນລົດແກ່ແຮ່ 777D ຄາເທີພິລາ ຂອງບໍລິສັດ.

ເຕັກໂນໂລຊີຄຸ້ມຄອງຄວາມອິດເມື່ອຍ ເບື້ອງຕົ້ນໄດ້ຖືກກໍານົດໃຫ້ເປັນການແກ້ໄຂອຸປະຕິເຫດດ້ານຄວາມປອດໄພທີ່ຕິດພັນກັບຄວາມອິດເມື່ອຍ ຊຶ່ງມີສັກກະຍາພາບສູງ ໂດຍບໍລິສັດແມ່ ຂອງບໍລິສັດ ພູເບ້ຍ ມາຍນິງ, ຄະນະກໍາມະການແກ້ໄຂຄວາມອິດເມື່ອຍຂອງແພນອອສ໌ ໃນປີ 2016. ໃນປີ 2018, ລະບົບດັ່ງກ່າວ ໄດ້ຖືກຕິດຕັ້ງໃສ່ໃນລົດແກ່ແຮ່ 5 ຄັນ ຊຶ່ງເປັນສ່ວນໜຶ່ງຂອງການທົດລອງນໍາໃຊ້ ແລະ ປະເມີນຄວາມສ່ຽງດ້ານຄວາມອິດເມື່ອຍ ຮ່ວມກັນກັບຄາເທີພິລາ. ຫຼັງຈາກປະເມີນຄວາມສ່ຽງແລ້ວ, ບໍລິສັດໄດ້ຕັດສິນໃຈທີ່ຈະກ້າວໄປຂ້າງໜ້າດ້ວຍການອອກນໍາໃຊ້ລະບົບດັ່ງກ່າວທົ່ວຂະບວນລົດ 777D ທັງໝົດ.

DDS ແມ່ນເຕັກໂນໂລຊີກວດຫາຄວາມອິດເມື່ອຍຢູ່ໃນຫ້ອງຂັບໂດຍບໍມີການລົບກວນ ຊຶ່ງຈະເຕືອນຜູ້ບັນຊາລົດທັນທີໃນເວລາທີ່ກວດພົບໄດ້ວ່າມີຄວາມອິດເມື່ອຍ ຫຼື ຂາດສະມາທິ. ມັນເຮັດວຽກດ້ວຍການຕິດຕາມໄລຍະການຫຼັບຕາ ແລະ ຄໍຕົກ. ຖ້າລະບົບດັ່ງກ່າວກວດຫາຄວາມອິດເມື່ອຍ ຫຼື ເກີດມີການຂາດສະມາທິ, ຜູ້ບັນຊາລົດ ຈະຖືກເຕືອນທັນທີໂດຍຜ່ານການສັ່ນຂອງບ່ອນນັ່ງໃນລົດ ແລະ/ຫຼື ແຈ້ງເຕືອນດ້ວຍສຽງ.

ລະບົບນີ້ ກ້າວໜ້າກວ່າການລະບຸອຸປະຕິເຫດພຽງຢ່າງດຽວ ເພື່ອໃຫ້ຂໍ້ມູນ ແລະ ການລາຍງານຕາມຕ້ອງການ ເພື່ອການປັບປຸງຢ່າງຕໍ່ເນື່ອງ ແລະ ການໃຫ້ຄວາມຮູ້ດ້ານຄວາມປອດໄພ ທົ່ວໂຄງການຂອງບໍລິສັດ. ລະບົບຈະປ້ອນຂໍ້ມູນໃຫ້ສູນຕິດຕາມຂະບວນລົດຄາເທີພິລາ, ຊຶ່ງເປັນສູນທີ່ທີ່ປຶກສາດ້ານຄວາມປອດໄພ ວິເຄາະຂໍ້ມູນ ແລະ ວີດີໂອ ຈາກລະບົບດັ່ງກ່າວ ແລະ ແຈ້ງໃຫ້ພະນັກງານພາກສະໜາມຮູ້ກ່ຽວກັບການຂັບລົດທີ່ມີການເຫງົານອນ ຫຼື ຂາດສະມາທິ.

ໃນ 6 ເດືອນທໍາອິດ ຫຼັງຈາກໄດ້ເລີ້ມຈັດຕັ້ງປະຕິບັດຢ່າງເຕັມສ່ວນຢູ່ໂຄງການພູຄໍາ, ໂຄງການດັ່ງກ່າວແມ່ນເຫັນການຫຼຸດລົງ 41 ສ່ວນຮ້ອຍໃນການເກີດຄວາມອິດເມື່ອຍໂດຍລວມ ແລະ ຫຼຸດລົ້ງ 80 ສ່ວນຮ້ອຍໃນຜູ້ບັນຊາລົດແກ່ແຮ່ທີ່ຮູ້ສຶກສະບາຍໃຈໃນເວລາຂັບລົດ ເນື່ອງຈາກຄວາມອິດເມື່ອຍ.

ໃນຂະນະດຽວກັນ ການຫຼຸດລົງຂອງອຸປະຕິເຫດທີ່ຕິດພັນກັບຄວາມອິດເມື່ອຍ ແລະ ຂາດສະມາທິ້ ໄດ້ບັນລຸຜົນໂດຍການຈັດຕັ້ງປະຕິບັດການປ້ອງກັນແບບຫຼາຍຊັ້ນ, ການຈັດຕັ້ງປະຕິບັດລະບົບ DDS ໄດ້ມີບົດບາດສໍາຄັນຕໍ່ຜົນສໍາເລັດດັ່ງກ່າວນີ້. ບໍລິສັດ ວາງແຜນທີ່ອອກນໍາໃຊ້ລະບົບດັ່ງກ່າວທົ່ວຂະບວນລົດຂຸດຄົ້ນ ແລະ ຂະບວນລົດຂົນສົ່ງ ໃນປີທີ່ໃກ້ຈະມາເຖິງນີ້.

ຮູບດ້ານເທິງ: ແຜນທີ່ເສັ້ນທາງ ຊຶ່ສະແດງໃຫ້ເຫັນການເດີນທາງທີ່ມີການຄຸ້ມຄອງຄວາມອິດເມື່ອຍຂອງບໍລິສັດ ພູເບ້ຍ ມາຍນິງ

# ພະນັກງານຂອງພວກເຮົາ

**ບໍລິສັດ ພູເບ້ຍ ມາຍນິງ ຮັບຮູ້ວ່າພະນັກງານຂອງຕົນ ປະກອບສ່ວນສຳຄັນຫຼາຍທີ່ສຸດໃນຄວາມສຳເລັດຂອງທຸລະກິດ. ບໍລິສັດ ເຂົ້າໃຈຄຸນນະທຳຄຽງຄູ່ທຸລະກິດໃນການຈູງໃຈ, ມີສ່ວນຮ່ວມ, ພັດທະນາ ແລະ ຮັກສາພະນັກງານຂອງຕົນ ແລະ ສະໜອງສະພາບແວດລ້ອມຢູ່ບ່ອນເຮັດວຽກໃຫ້ມີຄວາມໝາຍ ແລະ ມີຄຸນຄ່າ.**

**ບໍລິສັດ ພູເບ້ຍ ມາຍນິງ ສະໜັບສະໜູນຄວາມຫຼາກຫຼາຍໃນກຳລັງແຮງງານ ເນື່ອງຈາກວ່າມັນຊ່ວຍປັບປຸງທຸລະກິດ ແລະ ຂັບເຄື່ອນຄວາມສຳເລັດ. ນອກຈາກນັ້ນ, ບໍລິສັດ ກໍ່ຍັງມຸ້ງໝັ້ນຕໍ່ການພັດທະນາແຮງງານທ້ອງຖິ່ນຂອງຕົນ ຊຶ່ງມີຜົນປະໂຫຍດເພີ້ມເຕີມຂອງການຕອບສະໜອງໄດ້ໜຶ່ງໃນຈຸດປະສົງຂອງການປະມໍລະດົກຕົກທອດໄລຍະຍາວ ເພື່ອພັດທະນາແຮງງານໃຫ້ມີທັກສະທີ່ສາມາດສືບຕໍ່ເຂົ້າຮ່ວມ, ແລະ ຊ່ວຍເຮັດໃຫ້ເສດຖະກິດຂອງຊາດຈະເລີນເຕີບໂຕ ພາຍຫຼັງປິດບໍ່.**

## ການພັດທະນາແຮງງານທ້ອງຖິ່ນ

ການຫັນມາໃຊ້ແຮງງານທ້ອງຖິ່ນ ແມ່ນມີຜົນຈາກການຝຶກອົບຮົມ ແລະ ການພັດທະນາພະນັກງານລາວໃຫ້ມີທັກສະ ແລະ ຄວາມສາມາດຈຳເປັນຕໍ່ການປະຕິບັດງານໃນຕຳແໜ່ງທີ່ລະດັບສູງຂຶ້ນ. ບໍລິສັດ ພູເບ້ຍ ມາຍນິງ ສືບຕໍ່ທົບທວນ ແລະ ກຳນົດເປົ້າໝາຍສຳລັບການພັດທະນາແຮງງານທ້ອງຖິ່ນຂອງຕົນໃນລາວ.

ໃນປີ 2019, ບໍລິສັດ ໄດ້ຮັກສາການພັດທະນາແຮງງານທ້ອງຖິ່ນ 92 ສ່ວນຮ້ອຍໃນລາວ. ຜົນດັ່ງກ່າວ ແມ່ນສະແດງໃຫ້ເຫັນເຖິງຄວາມສຳເລັດຂອງລະບົບ ແລະ ແຜນງານຕ່າງໆທີ່ຖືກວາງອອກໄວ້ໃຫ້ພະນັກງານລາວ ແລະ ຄວາມມຸ້ງໝັ້ນຂອງບໍລິສັດ ຕໍ່ຈຸດປະສົງຂອງການພັດທະນາແຮງງານທ້ອງຖິ່ນຂອງຕົນ.

ໄລຍະປີດັ່ງກ່າວ, ພະນັກງານລາວທັງໝົດ 368 ຄົນທົ່ວເຂດດຳເນີນທຸລະກິດໄດ້ຮັບການເລື່ອນຕຳແໜ່ງ ຫຼື ປັບຂັ້ນເງິນເດືອນ. ອັນພົ້ນເດັ່ນແມ່ນ ພະນັກງານລາວ 110 ຄົນໄດ້ຮັບການເລື່ອນຕຳແໜ່ງໃນຂັ້ນນຳພາ ແລະ ວິຊາການລະດັບສູງ, ພະນັກງານອີກຫ້າຄົນ ໄດ້ເລື່ອນເປັນຮອງພະແນກ. ຫຼາຍແຜນງານ ແລະ ໂຄງການຕໍ່ເນື່ອງທີ່ເປັນທາງການເຊິ່ງສະໜັບສະໜຸນການພັດທະນາພະນັກງານລາວຊຶ່ງໄດ້ລະບຸດັ່ງຕໍ່ໄປນີ້.

## ໂຄງການພັດທະນາທັກສະການຊີ້ນຳ-ນຳພາ

ໃນປີ 2019, ພະນັກງານຈຳນວນ 141 ຄົນ (ຍິງ 29 ຄົນ) ໄດ້ເຂົ້າຮ່ວມໂຄງການພັດທະນາທັກສະການການນຳພາ ເຊິ່ງອອກແບບມາສຳລັບຫົວໜ້າທີມງານ, ພະນັກງານທີ່ມີບົດບາດຊີ້ນຳ ແລະ ມີທ່າກ້າວສູງ ໂດຍການຝຶກອົບຮົມແມ່ນຈຳເປັນເພື່ອສ້າງຄວາມສຳເລັດໃນບົດບາດຄຸມງານແຖວໜ້າ.

ພະນັກງານແຕ່ລະຄົນສຳເລັດການຝຶກອົບຮົມຕາມໂຄງສ້າງ ແລະ ແບບຝຶກຫັດຫຼັງຫຼັກສູດຫຼາຍກວ່າ 80 ຊົ່ວໂມງ. ໂຄງການພັດທະນາຄວາມເປັນຜູ້ນຳ ໄດ້ມີສ່ວນຊ່ວຍໃຫ້ບໍລິສັດສາມາດແຕ່ງຕັ້ງພະນັກງານລາວຂຶ້ນຮັບຕຳແໜ່ງຂັ້ນສູງ ແລະ ໄດ້ຊ່ວຍຫຼຸດຜ່ອນການເອື່ອຍອີງພະນັກງານຕ່າງປະເທດ.

## ການຝຶກອົບຮົມຊ່າງສີມືແຮງງານ

ບໍລິສັດ ພູເບ້ຍ ມາຍນິງ ຈຳກັດໄດ້ຈັດຕັ້ງປະຕິບັດ 2 ໂຄງການຝຶກອົບຮົມ. ໂຄງການທີ 1 ແມ່ນໂຄງການຊ່າງຝຶກອົບຮົມສີມືແຮງງານສຳລັບພະນັກງານສ້ອມແປງ, ເຊິ່ງມີການປະເມີນທັກສະ ແລະ ມີແຜນການຝຶກອົບຮົມໃຫ້ພະນັກງານແຕ່ລະຄົນ. ໂຄງການດັ່ງກ່າວໄດ້ເລີ່ມໃນເດືອນກັນຍາ 2014, ແລະ ມາຮອດທ້າຍປີ ມີນັກຮຽນຝຶກງານລາວ ຂະແໜງສ້ອມແປງຈຳນວນ 174 ຄົນ ໃຫ້ໄດ້ຮັບໃບປະກາດຊ່າງສີມືທີ່ຮັບຮູ້ໂດຍລັດຖະບານລາວໃນຂະແໜງທີ່ພວກເຂົາເລືອກຈາກວິທະຍາໄລການຊ່າງເຕັກນິກລາວ-ເຢຍລະມັນ ຢູ່ນະຄອນຫຼວງວຽງຈັນ.

ໂຄງການທີ 2 ແມ່ນໂຄງການຊ່າງຝຶກຫັດ ເຊິ່ງເລີ່ມຈັດຕັ້ງປະຕິບັດໃນປີ 2013. ໂຄງການຝຶກຫັດ ໃນດ້ານຊ່າງສີມືແຮງງານດ້ານເຕັກນິກ ເຊິ່ງໄດ້ຈັດຕັ້ງປະຕິບັດໂດຍການຮ່ວມມືກັບວິທະຍາໄລການຊ່າງ ລາວ-ເຢຍລະມັນ. ໃນເດືອນທັນວາ, ບໍລິສັດໄດ້ບັນຈຸເອົານັກຮຽນຝຶກງານໃໝ່ຈຳນວນ 44 ຄົນ, ລວມທັງແມ່ຍິງ 17 ຄົນ, ເຂົ້າໃນໂຄງການດັ່ງກ່າວ. ນັກຮຽນຝຶກງານໃໝ່ຊຸດນີ້ ຈະໄດ້ຜ່ານການຝຶກ ໃນການຝຶກອົບຮົມຊ່າງສີມືແຮງງານທີ່ຕົນໄດ້ເລືອກໄວ້ໃນເດືອນມັງກອນ 2020. ນັກຮຽນຝຶກງານທີ່ສຳເລັດຫຼັກສູດ ຈະໄດ້ຮັບໃບປະກາສະນິຍະບັດຂະແໜງຊ່າງສີມືແຮງງານຂັ້ນ ຂອງອົດສະຕຣາລີ ແລະ ໃບປະກາສະນິຍະບັດຊັ້ນສູງຈາກກະຊວງສຶກສາ ແລະ ກິລາ ຂອງລາວ.

# ກໍລະນີສຶກສາ:
## ເລີ້ມແຜນງານປະເມີນໃບຢັ້ງຢືນໃຫ້ພະນັກງານລາວ



ໃນເດືອນມີນາ 2019, ບໍລິສັດ ພູເບ້ຍ ມາຍນິງ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ກັບວິທະຍາໄລເຕັກນິກລາວ-ເຢຍລະມັນ ຢູ່ນະຄອນຫຼວງວຽງຈັນ ເພື່ອລິເລີ້ມແຜນງານປະເມີນເພື່ອຂໍການຮັບຮອງ (CAP).

ແຜນລິເລີ້ມພັດທະນາພະນັກງານໃໝ່, ມີເປົ້າໝາຍເພື່ອປັບປຸງທັກສະ ແລະ ຄວາມຮູ້ຂອງພະນັກງານລາວໃນຂະແໜງບໍາລຸງຮັກສາ ແລະ ສ້ອມແປງ ທີ່ປັດຈຸບັນຍັງບໍ່ໄດ້ຖືໃບປະກາສະນີຍະບັດສາຂາສີມືແຮງງານລາວຢ່າງເປັນທາງການເທື່ອ. ພະນັກງານຊ່າງສີມືແຮງງານລາວຂອງບໍລິສັດ ພູເບ້ຍ ມາຍນິງ ທີ່ມີເງື່ອນໄຂຈໍານວນ 174 ຄົນ ຖືກຈົດທະບຽນສໍາລັບແຜນງານດັ່ງກ່າວ, ຊຶ່ງສ້າງຕັ້ງຂຶ້ນເປັນສ່ວນໜຶ່ງຂອງຄວາມມຸ້ງໝັ້ນຂອງບໍລິສັດໃນການໃຫ້ໂອກາດພັດທະນາແກ່ພະນັກງານ ຊຶ່ງສອດຄ່ອງກັບໂຄງການຝຶກອົບຮົມດ້ານເຕັກນິກ ແລະ ອາຊີວະສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ. ການສອດຄ່ອງກັບແຜນງານທີ່ຮັບຮູ້ໂດຍລັດຖະບານ ຊ່ວຍໃຫ້ສາມາດມອບໃບປະກາດສາຂາຊ່າງສີມືແຮງງານລາວຢ່າງເປັນທາງການ ໃຫ້ພະນັກງານທີ່ມີເງື່ອນໄຂຂອງບໍລິສັດ ພູເບ້ຍ ມາຍນິງ.

ເຂົ້າຮ່ວມທຸກຄົນ ສໍາເລັດການປະເມີນ ແບບຈໍາລອງການຮຽນທີ່ຖືກຮັບຮູ້ກ່ອນ ເພື່ອກໍານົດການມີສິດໄດ້ຮັບເລືອກສໍາລັບ CAP. ມີລະດັບໃບຢັ້ງຢືນ 2 ລະດັບ ຊຶ່ງລວມມີ ໃບຢັ້ງຢືນຊ່າງສີມືແຮງງານ ສໍາລັບຜູເຂົ້າຮ່ວມທີ່ສໍາເລັດການສຶກສາຊັ້ນປະຖົມໃນລາວ ແລະ ໃບປະກາດສໍາລັບຜູ້ທີ່ສໍາເລັດການສຶກສາຊັ້ນມັດທະຍົມ ຫຼື ໃບປະກາດ/ປະລິນຍາ ໃນສາຂາວິຊາອື່ນ.

ນອກຈາກນັ້ນ, CAP ຍັງໃຫ້ການສະໜັບສະໜູນເປົ້າໝາຍໄລຍະຍາວຂອງບໍລິສັດໃນການປະມໍລະດົກຕຶກທອດທີ່ດີຢ່າງຍືນຍົງໄວ້ໃນລາວ ແລະ ສ້າງແຮງງານລາວໃຫ້ມີທັກສະຄວາມສາມາດ.

ຮູບຂ້າງເທິງ: ພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງບໍລິສັດ ພູເບ້ຍ ມາຍນິງ ແລະ ວິທະຍາໄລເຕັກນິກລາວ-ເຢຍລະມັນ ຢູ່ນະຄອນຫຼວງວຽງຈັນ ເພື່ອຈັດຕັ້ງໂຄງການປະເມີນໃບປະກາດ